# ຜູ້ແທນປະຊາຊົນ

PHOUTHEN PASAXON

ສຽງຂອງສະພາແຫ່ງຊາດ

ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

09-16 ມັງກອນ 2024

ປີທີ 13 ສະບັບທີ 953

ລາຍສັບປະດາ


## ຫາລືການກະກຽມເປັນເຈົ້າພາບກອງປະຊຸມຕ່າງໆຂອງ ໄອປາ ພາຍໃຕ້ການເປັນປະທານຂອງສະພາແຫ່ງຊາດລາວ



(ສພຊ) ໃນວັນທີ 05 ມັງກອນ 2024 ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ ພ້ອມດ້ວຍຄະນະ ໄດ້ເຂົ້າຮ່ວມກອງປະຊຸມທາງໄກລະຫວ່າງສະພາແຫ່ງຊາດລາວ ແລະ ກອງເລຂາໄອປາ ເພື່ອປຶກສາຫາລືການກະກຽມເປັນເຈົ້າພາບຈັດກອງປະຊຸມຕ່າງໆຂອງໄອປາ 2024 ທີ່ ສປປລາວ; ກອງປະຊຸມດັ່ງກ່າວໄດ້ດຳເນີນໄປພາຍໃຕ້ການເປັນປະທານຮ່ວມລະຫວ່າງຮອງປະທານສະພາແຫ່ງຊາດລາວ ແລະ ເລຂາທິການໃຫຍ່ສະມັດຊາລັດຖະສະພາລະຫວ່າງຊາດອາຊຽນ (AIPA) ແລະ ຄະນະກຳມາທິການກ່ຽວຂ້ອງຂອງສະພາແຫ່ງຊາດ ໄດ້ເຂົ້າຮ່ວມ.

ກອງປະຊຸມໄດ້ຮັບຟັງການສະເໜີຂອງເລຂາທິການໃຫຍ່ໄອປາກ່ຽວກັບແຜນຈັດກອງປະຊຸມຕ່າງໆທີ່ປິ່ນອ້ອມກອງປະຊຸມໃຫຍ່ໄອປາຄັ້ງທີ 45 ເປັນຕົ້ນແມ່ນ: ກອງປະຊຸມສຳມະນາໄວປາ (WAIPA) ຄັ້ງທີ 2 ທີ່ຈະຈັດຂຶ້ນໃນເດືອນກຸມພາ 2024 ທີ່ນະຄອນຫຼວງວຽງຈັນ, ກອງປະຊຸມຄະນະປະສານງານ

ອ່ານຕໍ່ໜ້າ 2

## ຄະນະຜູ້ແທນສະພາແຫ່ງຊາດລາວ ເຂົ້າຢ້ຽມຂໍ່ານັບປະທານສະພາແຫ່ງຊາດຫວຽດນາມ



ອ່ານໜ້າ 4

## ຮອງປະທານສະພາແຫ່ງຊາດ ພົບປະໂອ້ລົມພະນັກງານ 2 ກອງພັນໃຫຍ່



(ສພຊ) ວັນທີ 04-05 ມັງກອນ 2024 ທ່ານ ພົທ. ສຸວອນ ເລືອງບຸນມີ ຮອງປະທານສະພາແຫ່ງຊາດ ໄດ້ຢ້ຽມຢາມພົບປະ, ໂອ້ລົມພະນັກງານຫຼັກແຫຼ່ງກອງພັນໃຫຍ່ຕີພິເສດ 497 ແລະ ກອງພັນໃຫຍ່ລົດຕັງ-ຍານເກາະ 661 ເນື່ອງໃນໂອກາດວັນສ້າງຕັ້ງກອງທັບປະຊາຊົນລາວ ຄົບຮອບ 75 ປີ

ອ່ານຕໍ່ໜ້າ 3

## ພົບປະສອງຝ່າຍລະຫວ່າງ ກຳມາທິການສະພາແຫ່ງຊາດ ລາວ-ສ.ເກົາຫຼີ



ອ່ານໜ້າ 2

## ປະທານຄະນະມິດຕະພາບລັດຖະສະພາ ລາວ-ສ.ເກົາຫຼີ ພົບປະປະທານກຳມາທິການພິເສດ ງົບປະມານ ແລະ ການບັນຊີ



(ສພຊ) ທ່ານ ຮສ. ປອ. ລິນຄຳ ດວງສະຫວັນ ປະທານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ທັງເປັນປະທານຄະນະມິດຕະພາບລັດຖະສະພາ ສປປ ລາວ-ສ.ເກົາຫຼີ ໄດ້ພົບປະກັບທ່ານ ຊໍຊາມຊອກ (Seo Samseog) ປະທານກຳມາທິການພິເສດ ງົບປະມານ ແລະ ການບັນຊີ ຂອງສະພາແຫ່ງຊາດ ແຫ່ງ ສ.ເກົາຫຼີ ໃນວັນທີ 02 ມັງກອນ 2024 ທີ່ຫໍສະພາແຫ່ງຊາດ ໃນ

ອ່ານຕໍ່ໜ້າ 2

## ກຳມາທິການບັນດາເຜົ່າ ຮັບເຄື່ອງຊ່ວຍເຫຼືອ



(ສພຊ) ວັນທີ 05 ມັງກອນ 2023 ທີ່ຫ້ອງຮັບແຂກສະພາແຫ່ງຊາດ ໄດ້ມີພິທີມອບ-ຮັບເຄື່ອງຊ່ວຍເຫຼືອຈາກສູນລວມຄຣິສຕະຈັກຂ່າວປະເສີດ ສປປ ລາວ ເພື່ອເປັນການຊ່ວຍເຫຼືອພໍ່ແມ່ປະຊາຊົນ, ເດັກນ້ອຍ ແລະ ຜູ້ດ້ອຍໂອກາດທີ່ຢູ່ເຂດຫ່າງໄກສອກຫຼີກຕ່າງໆຂອບເຂດທົ່ວປະເທດ ໃນການຕ້ານກັບອາກາດໜາວເຢັນ ໂດຍຜ່ານສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ເພື່ອນຳໄປສິ່ງມອບຕໍ່; ຕາງໜ້າມອບໂດຍທ່ານ ສຈ. ປອ. ແສງດາວ ຊົມພູນຸດ ຮອງປະທານສູນລວມຄຣິດສຕະຈັກຂ່າວປະເສີດ ສປປ ລາວ ແລະ ຕາງໜ້າຮັບໂດຍທ່ານ ຄຳຈັນ ໂສຕາປະເສີດ ປະທານກຳມາທິການບັນດາເຜົ່າ ເຊິ່ງເຄື່ອງທີ່ນຳມາມອບໃນຄັ້ງນີ້ປະກອບມີ: ຜ້າຫົ່ມ ແລະ ເຄື່ອງກັນໜາວ ລວມມູນຄ່າ 33.000.000 ກີບ (ສາມສິບສາມລ້ານກີບ).

**(ນາງ ສຸພາວັນ ທອມສະນິດ)**

## ທາລື...

(ຕໍ່ຈາກໜ້າ 1)

(AIPA Caucus) ຄັ້ງທີ 15, ກອງປະຊຸມສະພາທີ່ປຶກສາຂອງໄອປາກ່ຽວກັບໄພອັນຕະລາຍຂອງຢາເສບຕິດ(AIPACODD) ຄັ້ງທີ 7, ກອງປະຊຸມພົບປະລະຫວ່າງຜູ້ນຳລັດຖະສະພາສະມາຊິກໄອປາ ແລະ ຜູ້ນຳອາຊຽນ (AIPA-ASEAN Leader's Interface Meeting) ໃນໂອກາດກອງປະຊຸມສຸດຍອດອາຊຽນ ແລະ ກອງປະຊຸມອື່ນໆ; ພ້ອມດຽວກັນນັ້ນ, ກອງປະຊຸມຍັງໄດ້ປຶກສາຫາລື ແລະ ສົນທະນາແລກປ່ຽນກ່ຽວກັບການກະກຽມເປັນເຈົ້າພາບຈັດກອງປະຊຸມໃຫຍ່ AIPA ຄັ້ງທີ 45 ແລະ ກິດຈະກຳຕ່າງໆຂອງໄອປາ, ການເຄື່ອນໄຫວ, ບົດບາດ ແລະ ການປະຕິບັດໜ້າທີ່ການເປັນປະທານໄອປາຄັ້ງທີ 45 ຂອງ ສປປລາວ, ການປະສານສົມທົບລະຫວ່າງກອງເລຂາໄອປາຂອງສະພາແຫ່ງຊາດລາວກັບກອງເລຂາໄອປາ ໃນການແບ່ງຄວາມຮັບຜິດຊອບ ແລະ ລາຍລະອຽດການກະກຽມເນື້ອໃນຕ່າງໆເພື່ອຮັບໃຊ້ກອງປະຊຸມ ໃຫ້ມີຄວາມເປັນເອກະພາບຕໍ່ກັບການກະກຽມແຜນຈັດກອງປະຊຸມໃຫຍ່ໄອປາຄັ້ງທີ 45 ແລະ ກອງປະຊຸມຍ່ອຍປີ່ນອ້ອມຕ່າງໆໃນປີ 2024.

ທ່ານຮອງປະທານສະພາແຫ່ງຊາດລາວ ໄດ້ສະແດງຄວາມຂອບໃຈ ແລະ ຕີລາຄາສູງຕໍ່ການປະຕິບັດໜ້າທີ່ຂອງທ່ານເລຂາທິການໃຫຍ່ໄອປາ ແລະ ກອງເລຂາໄອປາ ໃນໄລຍະຜ່ານມາ ເຊິ່ງມີບົດບາດສຳຄັນໃນການເປັນເສນາທິການໃຫ້ແກ່ບັນດາລັດຖະສະພາສະມາຊິກໄອປາ ໂດຍສະເພາະການເປັນຈຸດໃຈກາງໃນການປະສານງານເພື່ອຈັດຕັ້ງປະຕິບັດພາລະບົດບາດທາງດ້ານນິຕິບັນຍັດ ກໍຄືການເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນອາຊຽນ ໃນການຊຸກຍູ້ສິ່ງເສີມວຽກງານຕ່າງໆຂອງປະຊາຄົມອາຊຽນ; ພ້ອມດຽວກັນນີ້, ກໍໄດ້ສະແດງຄວາມຊົມເຊີຍຕໍ່ກອງເລຂາໄອປາທີ່ໄດ້ກະກຽມຕາຕະລາງ, ແຜນການເຄື່ອນໄຫວບັນດາກິດຈະກຳ ແລະ ກອງປະຊຸມປີ່ນອ້ອມຕ່າງໆຕະຫຼອດປີນີ້ ທີ່ຮັບໃຊ້ໃຫ້ແກ່ກອງປະຊຸມໃຫຍ່ໄອປາຄັ້ງທີ 45 ທີ່ຈະຈັດຂຶ້ນທີ່ ສປປ ລາວ ໃນລະຫວ່າງວັນທີ 18-24 ຕຸລາ 2024.

ໃນຕອນທ້າຍຂອງກອງປະຊຸມ ຄະນະຜູ້ແທນກໍໄດ້ປຶກສາຫາລື, ປະກອບຄຳຄິດຄຳເຫັນ ແລະ ມີຄວາມເປັນເອກະພາບ ແລະ ເຫັນດີຮ່ວມກັນໃນຫຼາຍໜ້າວຽກ ບົນຈິດໃຈພື້ນຖານຄວາມສາມັກຄີ ແລະ ເອກະສັນຂອງອາຊຽນ.

## ປະທານຄະນະ...

(ຕໍ່ຈາກໜ້າ 1)

ໂອກາດເດີນທາງມາຢ້ຽມຢາມ ແລະ ເຮັດວຽກທີ່ ສປປລາວ.

ໃນໂອກາດດັ່ງກ່າວ, ທ່ານ ຮສ. ປອ. ລີນຄຳ ດວງສະຫວັນ ໄດ້ສະແດງຄວາມຕ້ອນຮັບຢ່າງອົບອຸ່ນ ພ້ອມທັງຕີລາຄາສູງໃນການພົບປະໃນຄັ້ງນີ້ ເຊິ່ງຈະເປັນໂອກາດດີທີ່ຈະໄດ້ປຶກສາຫາລື ແລະ ຊຸກຍູ້ເສີມຂະຫຍາຍສາຍພົວພັນ ແລະ ການຮ່ວມມືລະຫວ່າງສອງປະເທດລາວ ແລະ ສ.ເກົາຫຼີ ກໍຄືສອງອົງການນິຕິບັນຍັດທີ່ມີມູນເຊື້ອດີງາມມາແຕ່ດົນນານ ແລະ ໃຫ້ໄດ້ຮັບການພັດທະນາ ແລະຂະຫຍາຍຕົວຢ່າງຕໍ່ເນື່ອງ. ທ່ານປະທານກຳມາທິການ ໄດ້ລາຍງານຫຍໍ້ໃຫ້ຊາບກ່ຽວກັບທີ່ຕັ້ງ ແລະ ພາລະບົດບາດຂອງກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ໂດຍເນັ້ນໃຫ້ເຫັນ 03 ພາລະບົດບາດຕົ້ນຕໍ ເປັນຕົ້ນ: ການສ້າງ, ປັບປຸງກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ; ການພິຈາລະນາບັນຫາສຳຄັນ ຂອງປະເທດຊາດ; ການຕິດຕາມກວດກາການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ມະຕິຂອງສະພາແຫ່ງຊາດ, ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ ໃນຂົງເຂດວຽກງານເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ. ກຳມາທິການ ເຮັດວຽກຮ່ວມກັບ 6 ກະຊວງຄື: ກະຊວງກະສິກຳ ແລະ ປ່າໄມ້, ກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງໂຍທາທິການ ແລະ ຂົນສົ່ງ, ກະຊວງເຕັກໂນໂລຊີ ແລະ ການສື່ສານ, ກະຊວງພະລັງງານ ແລະ ບໍ່ແຮ່, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ. ໃນນາມເປັນປະທານຄະນະມິດຕະພາບລັດຖະສະພາລາວ-ສ.ເກົາຫຼີ, ທ່ານໄດ້ລາຍງານໃຫ້ຊາບກ່ຽວກັບພາລະບົດບາດຂອງຄະນະມິດຕະພາບລັດຖະສະພາລະຫວ່າງ ສະພາແຫ່ງຊາດລາວ ແລະ ສະພາແຫ່ງຊາດ ສ.ເກົາຫຼີ ຂອງສະພາແຫ່ງຊາດລາວຊຸດທີ IX ແລະ ລົງເລິກບັນດາກິດຈະກຳ ທີ່ໄດ້ພົບປະແລກປ່ຽນເຊິ່ງກັນແລະກັນໃນໄລຍະຜ່ານມາ ເປັນຕົ້ນການພົບປະສອງຝ່າຍໃນໂອກາດເຂົ້າຮ່ວມກອງປະຊຸມສາກົນຕ່າງໆ, ການຢ້ຽມຢາມແລກປ່ຽນບົດຮຽນເຊິ່ງກັນ ແລະກັນ; ພ້ອມດຽວກັນນີ້ ທ່ານຍັງສະແດງຄວາມຂອບໃຈຕໍ່ລັດຖະບານ ແລະ ປະຊາຊົນ ສ.ເກົາຫຼີ ທີ່ໄດ້ໃຫ້ການຊ່ວຍເຫຼືອແກ່ ສປປລາວ ເປັນຕົ້ນການຊ່ວຍເຫຼືອເພື່ອການພັດທະນາ, ການຊ່ວຍເຫຼືອດ້ານມະນຸດສະທຳ, ການຊ່ວຍເຫຼືອທາງດ້ານການສຶກສາ ແລະ ອື່ນໆ ເຊິ່ງເປັນການປະກອບສ່ວນໃນການພັດທະນາເສດຖະກິດ-ສັງຄົມຂອງ ສປປລາວ ໃຫ້ຂະຫຍາຍຕົວເປັນກ້າວໆ.

ຈາກນັ້ນ, ທ່ານປະທານກຳມາທິການພິເສດງົບປະມານ ແລະ ການບັນຊີ ຂອງສະພາແຫ່ງຊາດ ແຫ່ງ ສ.ເກົາຫຼີ ໄດ້ສະແດງຄວາມຂອບໃຈຕໍ່ປະທານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ທັງເປັນປະທານຄະນະມິດຕະພາບລັດຖະສະພາ ສປປລາວ-ສ.ເກົາຫຼີ ທີ່ໄດ້ໃຫ້ການຕ້ອນຮັບຢ່າງອົບອຸ່ນ ແລະ ໃຫ້ຄຳໝັ້ນວ່າຈະສືບຕໍ່ຊຸກຍູ້, ສົ່ງເສີມສາຍພົວພັນມິດຕະພາບ ແລະ ການຮ່ວມມືອັນດີງາມລະຫວ່າງສອງປະເທດ ກໍຄືສອງອົງການນິຕິບັນຍັດທີ່ມີມາແລ້ວນັ້ນ ໃຫ້ສືບຕໍ່ໄດ້ຮັບການເສີມຂະຫຍາຍ ແລະ ເປັນຮູບປະທຳຍິ່ງໆຂຶ້ນ.

**(ນາງ ສຸພາວັນ ທອມສະນິດ)**

## ພົບປະ...

(ຕໍ່ຈາກໜ້າ 1)

(ສພຊ) ໃນຕອນບ່າຍຂອງວັນທີ 02 ມັງກອນ 2024 ທີ່ສະພາແຫ່ງຊາດ ໄດ້ມີການພົບປະສອງຝ່າຍ ລາວ-ສ.ເກົາຫລີ ເຊິ່ງຝ່າຍລາວນຳໂດຍທ່ານ ປອ. ລີເບີ ລີບົວປາວ ປະທານກຳມາທິການແຜນການ, ການເງິນ ແລະ ການກວດສອບ ສະພາແຫ່ງຊາດລາວ ກັບ ທ່ານ ຊໍຊາມຊອກ(Seo Sam Seog) ປະທານກຳມາທິການພິເສດດ້ານງົບປະມານ ແລະ ການບັນຊີ ສະພາແຫ່ງຊາດ ສ.ເກົາຫລີ ພ້ອມດ້ວຍຄະນະ ເນື່ອງໃນໂອກາດເດີນທາງມາຢ້ຽມຢາມ ແລະ ເຄື່ອນໄຫວເຮັດວຽກຢູ່ ສປປລາວ.

ການພົບປະຄັ້ງນີ້ ແມ່ນຕີລາຄາສູງຕໍ່ສາຍພົວພັນມິດຕະພາບ ແລະ ການຮ່ວມມືຂອງພວກເຮົາ ເຊິ່ງຈະເປັນການປະກອບສ່ວນອັນສຳຄັນເຂົ້າໃນການເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມືລະຫວ່າງສອງປະເທດ ລາວ-ສ.ເກົາຫຼີ ທີ່ມີມູນເຊື້ອດີງາມມາແຕ່ດົນນານ ແລະ ໄດ້ຮັບການເສີມຂະຫຍາຍຢ່າງຕໍ່ເນື່ອງ ເຊິ່ງສະແດງອອກໃນການແລກປ່ຽນການຢ້ຽມຢາມຂອງຄະນະຜູ້ແທນຂັ້ນສູງ ແລະ ຂັ້ນຕ່າງໆລະຫວ່າງສອງປະເທດ; ມີການຮ່ວມມືທີ່ດີທາງດ້ານເສດຖະກິດ, ການຄ້າ, ການລົງທຶນ, ສຶກສາ, ສາທາລະນະສຸກ, ທ່ອງທ່ຽວ, ກິລາ ແລະ ອື່ນໆ. ນອກນີ້, ສ.ເກົາຫຼີ ຍັງເປັນປະເທດທີ່ມີການລົງທຶນໃນອັນດັບທີ 5 ຢູ່ ສປປ ລາວ ໃນຂະແໜງພະລັງງານໄຟຟ້າ, ການກໍ່ສ້າງ, ການບໍລິການ, ກະສິກຳ, ອຸດສາຫະກຳ-ຫັດຖະກຳ, ການທ່ອງທ່ຽວ, ໂຮງແຮມ ແລະ ຮ້ານອາຫານ, ທະນາຄານ ແລະ ອື່ນໆ ພິເສດແມ່ນນັກທ່ອງທ່ຽວຈາກ ສ.ເກົາຫຼີ ເຊິ່ງມີຫຼາຍຖ້ຽວບິນຕໍ່ອາທິດ.

ໃນການພົບປະ, ທັງສອງຝ່າຍໄດ້ແຈ້ງໃຫ້ຮູ້ກ່ຽວກັບສະພາບການທີ່ພົ້ນເດັ່ນໃນການພັດທະນາເສດຖະກິດ-ສັງຄົມຂອງຕົນໃຫ້ກັນ ແລະ ກັນຊາບໂດຍສັງເຂບ, ພິເສດແມ່ນສະພາບການເຄື່ອນໄຫວຂອງກຳມາທິການພິເສດດ້ານງົບປະມານ ແລະ ການບັນຊີ ສະພາແຫ່ງຊາດ ສ.ເກົາຫຼີ. ທ່ານ ປອ. ລີເບີ ລີບົວປາວ ໄດ້ສະແດງຄວາມຂອບໃຈຕໍ່ສະພາແຫ່ງຊາດ, ລັດຖະບານ ແລະ ປະຊາຊົນ ສ.ເກົາຫຼີ ທີ່ໄດ້ໃຫ້ການຊ່ວຍເຫຼືອ ແກ່ ສປປ ລາວ ມາຕະຫຼອດ ເປັນຕົ້ນການເກັບກູ້ລະເບີດບໍ່ທັນແຕກ (UXO), ການຊ່ວຍເຫຼືອເພື່ອການພັດທະນາ (ODA), ການຊ່ວຍເຫຼືອດ້ານສາທາລະນະສຸກ ແລະ ອື່ນໆ; ພິເສດ ໄດ້ຮັບເອົາແຮງງານລາວໄປອອກແຮງງານຢູ່ ສ.ເກົາຫຼີ ເປັນຈຳນວນຫຼາຍ ເຊິ່ງເປັນການສ້າງວຽກເຮັດງານທຳ ແລະ ລາຍຮັບໃຫ້ແກ່ປະຊາຊົນລາວເວົ້າລວມ, ເວົ້າສະເພາະເປັນການປະກອບ ສ່ວນໃນການພັດທະນາເສດຖະກິດ-ສັງຄົມຂອງສປປລາວໃຫ້ຂະຫຍາຍຕົວ.

ໃນໄລຍະຜ່ານມາ, ໄດ້ມີການແລກປ່ຽນຄະນະຜູ້ແທນຢ້ຽມຢາມເຊິ່ງກັນແລະກັນໃນລະດັບປະທານສະພາແຫ່ງຊາດ, ປະທານກຳມາທິການ ແລະ ຄະນະມິດຕະພາບລັດຖະສະພາ ລາວ-ສ.ເກົາຫຼີ ຢ່າງເປັນປົກກະຕິ ເປັນຕົ້ນ: ປີ 2015 ທ່ານປະທານສະພາແຫ່ງຊາດ ສ.ເກົາຫຼີ ຢ້ຽມຢາມ ສປປລາວ, ປີ 2022 ທ່ານຮອງປະທານສະພາແຫ່ງຊາດ ສ.ເກົາຫຼີ ມາຢ້ຽມຢາມລາວ; ປີ 2023 ປະທານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ, ຄະນະມິດຕະພາບລັດຖະສະພາ ລາວ-ສ.ເກົາຫຼີ ແລະ ປະທານກຳມາທິການວັດທະນະທຳ-ສັງຄົມ ຂອງສະພາແຫ່ງຊາດລາວ ໄປຢ້ຽມຢາມ ແລະ ເຮັດວຽກ ຢູ່ ສ.ເກົາຫຼີ; ເດືອນກໍລະກົດ2023 ທ່ານ ປັກ ບ່ຽງຊອກ (Park Byeong-Seug) ອະດີດປະທານສະພາແຫ່ງຊາດ ແຫ່ງ ສ.ເກົາຫຼີ ພ້ອມຄະນະ ມາຢ້ຽມຢາມ ແລະ ເຮັດວຽກ ຢູ່ ສປປ ລາວ. ໃນໄລຍະຜ່ານມາ ກຳມາທິການແຜນການ, ການເງິນ ແລະ ການກວດສອບ ກໍໄດ້ຮັບການຊ່ວຍເຫຼືອເຝິກອົບຮົມດ້ານວິຊາການ ແລະ ອຸປະກອນຮັບໃຊ້ຫ້ອງການຈາກອົງການໂກຍກາ (KOICA) ປະຈຳ ສປປ ລາວ ຄື: ພະນັກ ງານ 3 ທ່ານ ໄປເຝິກອົບຮົມໃນຫົວຂໍ້ SMEs ຢູ່ ສ.ເກົາຫຼີ 2 ຄັ້ງ, ເຂົ້າຮ່ວມເຝິກອົບຮົມຢູ່ລາວ ໃນຫົວຂໍ້ການປະເມີນວິສາຫະກິດຜ່ານລະບົບອອນລາຍ 2 ຄັ້ງ, ໄດ້ຮັບ Laptop ແລະ Tablet ຈຳນວນໜຶ່ງ.

**(ນາງ ໄຊໂສພາພອນ ມິ່ງມຸງຄຸນ)**

## ເລື່ອງ ເດັ່ນ ຂ່າວ ເດັດ

*# ຄັດໂດຍ: ທອມສະນິດ*

❒ ມາຮອດເດືອນທັນວາ ປີ 2023 ອັດຕາເງິນເຟີ້ຂອງ ສປປ ລາວ ຢູ່ໃນທ່າອຽງສືບຕໍ່ຫຼຸດລົງຢ່າງຕໍ່ເນື່ອງຈາກເດືອນກຸມພາ ປີ 2023 ເນື່ອງຈາກທຽບກັບຖານອັດຕາເງິນເຟີ້ ປີ 2022 ທີ່ມີຖານອັດຕາເງິນເຟີ້ສູງ ເຖິງຢ່າງໃດກໍຕາມລາຄາສິນຄ້າໂດຍລວມໃນເດືອນທັນວາ 2023 ແມ່ນຍັງສືບຕໍ່ເພີ່ມຂຶ້ນ ແຕ່ເປັນການເພີ່ມຂຶ້ນໃນຈັງຫວະທີ່ຊ້າລົງກວ່າເດືອນທີ່ຜ່ານມາເລັກໜ້ອຍ ໃນນັ້ນ, ດັດຊະນີລາຄາສິນຄ້າລວມຢູ່ໃນລະດັບ 208,4 ເຊິ່ງເພີ່ມຂຶ້ນຈາກ 167,4 ໃນເດືອນທັນວາ 2022 ເຮັດໃຫ້ອັດຕາເງິນເຟີ້ລວມ ຂອງ ສປປ ລາວ ໃນເດືອນທັນວາ 2023 ໃນລະດັບ 24,4% (ເດືອນພະຈິກ 25,2%) ແລະສະເລ່ຍໝົດປີ 2023 ຢູ່ໃນລະດັບ 31,2%.

**ໜສພ. ວຽງຈັນໃໝ່ 02/01/2024**

❒ ໃນປີ 2023 ຜ່ານມາ ທົ່ວປະເທດມີນັກລົງທຶນທັງພາຍໃນ ແລະ ຕ່າງປະເທດ ເຂົ້າມາລົງທຶນຢູ່ເຂດເສດຖະກິດພິເສດ ທັງໝົດ 178 ບໍລິສັດ, ກວມເອົາຂະແໜງອຸດສາຫະກຳ 18 ບໍລິສັດ, ການຄ້າ 30 ບໍລິສັດ, ບໍລິການ 127 ບໍລິສັດ ແລະ ກະສິກຳ 3 ບໍລິສັດ ໂດຍມີທຶນທັງໝົດ 520 ລ້ານກວ່າໂດລາ ແລະ ທຶນຈົດທະບຽນ 178 ລ້ານກວ່າໂດລາ. ນອກຈາກບໍລິສັດທີ່ເຂົ້າມາລົງທຶນແລ້ວຍັງມີບັນດາຫ້າງຮ້ານ ແລະ ຫົວໜ່ວຍວິສາຫະກິດຈຳນວນໜຶ່ງທີ່ເຂົ້າມາລົງທຶນພາຍໃນເຂດເສດຖະກິດພິເສດ ທັງໝົດ 2.645 ຫົວໜ່ວຍ.

**ໜສພ. ປະຊາຊົນ 03/01/2024**

❒ ໄລຍະສະເຫຼີມສະຫຼອງສົ່ງທ້າຍປີເກົ່າ 2023 ຕ້ອນຮັບປີໃໝ່ 2024 ນັບແຕ່ວັນທີ 29 ທັນວາ 2023 ຫາວັນທີ 2 ມັງກອນ 2024 ທົ່ວປະເທດ ມີອຸບັດເຫດເກີດຂຶ້ນທັງໝົດ 148 ລາຍ, ເສຍຊີວິດ 21 ຄົນ, ໄດ້ຮັບບາດເຈັບ 227 ຄົນ, ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ອຸບັດເຫດຫຼຸດລົງ 42 ລາຍ, ເສຍຊີວິດຫຼຸດລົງ 5 ຄົນ.

**ໜສພ. ປະເທດລາວ 04/01/2024**

❒ ກະຊວງໂຍທາທິການ ແລະ ຂົນສົ່ງ ອອກແຈ້ງການເຖິງບັນດາຫົວໜ້າຫ້ອງການກະຊວງ, ອົງການທຽບເທົ່າ, ຫ້ອງວ່າການປົກຄອງແຂວງ, ນະຄອນຫຼວງວຽງຈັນ, ອົງການຈັດຕັ້ງສາກົນ, ວິສາຫະກິດ, ພະນັກງານ, ທະຫານ, ຕຳຫຼວດ, ປະຊາຊົນບັນດາເຜົ່າ ໃນຂອບເຂດທົ່ວປະເທດ ໃຫ້ຮັບຊາບທົ່ວກັນກ່ຽວກັບການປ່ຽນຊື່ປ້າຍທະບຽນຍານພາຫະນະທາງບົກ ຈາກກຳແພງນະຄອນ ມາເປັນນະຄອນຫຼວງວຽງຈັນ ນັບແຕ່ວັນທີ 1 ມີນາ 2024 ເປັນຕົ້ນໄປ ເຊິ່ງຍານພາຫະນະທາງບົກທີ່ຂຶ້ນທະບຽນແລ້ວ ຊື່ປ້າຍທະບຽນກຳແພງນະຄອນ ຖ້າຢາກສືບຕໍ່ນຳໃຊ້ກໍສາມາດໃຊ້ໄດ້ຈົນກວ່າໃບທະບຽນໝົດອາຍຸ ຈຶ່ງປ່ຽນເປັນນະຄອນຫຼວງວຽງຈັນ ຫຼື ຖ້າມີຈຸດປະສົງຢາກປ່ຽນກ່ອນກໍສາມາດປ່ຽນໄດ້ຕາມຄວາມສະໝັກໃຈ ແຕ່ລະຫັດປ້າຍ ແລະ ຕົວເລກທະບຽນໃຫ້ຮັກສາຄືເກົ່າ.

**ໜສພ. ປະເທດລາວ 05/01/2024**

## ຮອງປະທານ...

(ຕໍ່ຈາກໜ້າ 1)



(20 ມັງກອນ 1949-20 ມັງກອນ 2024) ທີ່ໃກ້ຈະມາເຖິງ ຕິດພັນກັບການເຜີຍແຜ່ຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດຊຸດທີ IX, ສະພາປະຊາຊົນແຂວງວຽງຈັນ ແລະ ສະພາປະຊາຊົນນະຄອນຫຼວງວຽງຈັນ ຊຸດທີ II ໂດຍມີທ່ານ ບຸນສອນ ເຜີດລາວັນ ປະທານສະພາປະຊາຊົນແຂວງວຽງຈັນ ແລະ ທ່ານ ບຸນທາມ ພຸດທະວົງ ຮອງປະທານສະພາປະຊາຊົນນະຄອນຫຼວງວຽງຈັນ ພ້ອມດ້ວຍຄະນະເຂົ້າຮ່ວມຕິດຕາມ.

ທ່ານ ພັອ. ພອນໄຊ ບໍລະດົມ ຮອງເລຂາຄະນະພັກກອງບັນຊາການ, ຫົວໜ້າການເມືອງກອງພົນໃຫຍ່ພິເສດ 497 ໄດ້ລາຍງານຫຍໍ້ກ່ຽວກັບການເຕີບໃຫຍ່ຂະຫຍາຍຕົວຂອງກອງພົນໃຫຍ່ດັ່ງກ່າວ ແລະ ຜົນງານການເຄື່ອນໄຫວເຮັດໜ້າທີ່ການເມືອງຂອງກົມກອງໃນໄລຍະຜ່ານມາ ເຊິ່ງທ່ານໃຫ້ຮູ້ວ່າ: ກອງພົນໃຫຍ່ພິເສດ 497 ຂຶ້ນກັບກະຊວງປ້ອງກັນປະເທດ, ວຽກງານພັກ ຂຶ້ນກັບຄະນະພັກກະຊວງປ້ອງກັນປະເທດ, ວຽກງານການເມືອງ ຂຶ້ນກັບກົມໃຫຍ່ການເມືອງກອງທັບ, ວຽກວິຊາສະເພາະຂຶ້ນກັບກົມ 49 ກົມໃຫຍ່ເສນາທິການກອງທັບ; ເປັນກຳລັງຈຸດໜັກໃຫ້ແກ່ກະຊວງປ້ອງກັນປະເທດໃນການກຽມພ້ອມສູ້ຮົບ ແລະ ເຄື່ອນໄຫວສູ້ຮົບ ແກ້ໄຂກໍລະນີໃນຂອບເຂດທົ່ວປະເທດເມື່ອມີຄຳສັ່ງຂອງຂັ້ນເທິງ; ປະກອບມີ 05 ພະແນກການ, 03 ກອງພັນນ້ອຍ, 01 ກອງຮ້ອຍ ກຳລັງໄຟຂຶ້ນກັບ; ມີ 01 ອົງຄະນະພັກ, 05 ຄະນະພັກຮາກຖານ, 20 ໜ່ວຍພັກຂຶ້ນກັບ, ມີສະມາຊິກພັກທັງໝົດ 717 ສະຫາຍ ຍິງ 108 ສະຫາຍ, ສົມບູນ 666 ສະຫາຍ ຍິງ 98 ສະຫາຍ, ສຳຮອງ 51 ສະຫາຍ ຍິງ 10 ສະຫາຍ, ມີໜ່ວຍພັກເຂັ້ມແຂງໜັກແໜ້ນ 20 ໜ່ວຍພັກ. ພາຍຫຼັງທີ່ສ້າງຕັ້ງເປັນກອງພົນໃຫຍ່ພິເສດ 497 ໄດ້ປະກອບສ່ວນເຄື່ອນໄຫວສູ້ຮົບກັບກົມກອງເພື່ອນຄື: ບັ້ນກວດລ້າງພວກປຸ້ນເຂດຜາຫຼັງຜາ (ປີ 1997); ຜາຫຼັງງິ້ວ, ຜາຂາວ (ປີ 1998); ເຂດຍອດນ້ຳເຈຍ, ນ້ຳເມີຍ ໄຊສົມບູນ (ປີ 2000); ເຂດຫ້ວຍຈຽດ, ຜາທີ່ ແຂວງຫົວພັນ; ຍອດນ້ຳຈຶງ, ນ້ຳປອນ ແຂວງບໍລິຄຳໄຊ (ປີ 2003); ເຂດນ້ຳງື່ມ 3, ຜາງູ, ຍອດນ້ຳແຊງ-ນ້ຳຊໍ-ນ້ຳຕິ່ງ (ປີ 2005-2007); ຍອດ ນ້ຳໂມ້-ຜາລິ່ງຊວ້າ (ປີ 2016-2020) ນອກນັ້ນ ຍັງໄດ້ປະກອບສ່ວນປ້ອງກັນບັນດາກອງປະຊຸມແລະວັນບຸນທີ່ສຳຄັນຕ່າງໆຂອງພັກ-ລັດ. ໄດ້ລົງກໍ່ສ້າງຮາກຖານການເມືອງຢູ່ 2 ກຸ່ມຄື: ກຸ່ມ 3, ກຸ່ມ 4 ຂອງເມືອງທຸລະຄົມ ມີ 18 ໝູ່ບ້ານ, ໄດ້ສົມທົບອຳນາດການປົກຄອງທ້ອງຖິ່ນ ແລະ ຕາໜ່າງ ປກຊ-ປກສ ເກັບກຳສະພາບການເພື່ອແກ້ໄຂເຮັດ ໃຫ້ສະພາບຂອບເຂດກົມກອງຮັບຜິດຊອບມີຄວາມສະຫງົບ; ນອກຈາກນັ້ນ ກໍຍັງໄດ້ກຳສະພາບຮອບດ້ານ ແລະ ຍົກສູງສະຕິລະວັງຕົວກຽມພ້ອມສູ້ຮົບໃນທຸກພາວະຢ່າງເຂັ້ມງວດ ໃນແຕ່ລະວັນມີລະບົບປະຈຳການ, ກຳລັງປະຈຳການ, ພາຫະນະປະຈຳການຕະຫຼອດ 24 ຊົ່ວໂມງບໍ່ໄດ້ຂາດ ແລະ ຈັດຕັ້ງປ້ອງກັນເວນຍາມສະຖານທີ່ຄ້າຍຄູ, ສາງຄັງຕ່າງໆ ມີຄວາມປອດໄພ 100%, ກວດກາສາລະເວເຮັດໃຫ້ສະພາບຂອບເຂດກົມກອງຮັບຜິດຊອບມີຄວາມສະຫງົບ. ວຽກງານປັບປຸງກໍ່ສ້າງກຳລັງຄະນະພັກໄດ້ເອົາໃຈໃສ່ສຶກສາອົບຮົມການເມືອງແນວຄິດໃຫ້ແກ່ພະນັກງານ-ນັກຮົບ ມີແນວຄິດຫຼັກໝັ້ນ ແລະ ເຊື່ອໝັ້ນຕໍ່ແນວທາງ, ແຜນນະໂຍບາຍຂອງພັກ ແລະ ຮັບຮູ້ຕໍ່ໜ້າທີ່ການເມືອງຂອງຕົນຕິດພັນກັບການດຳເນີນຊີວິດການເມືອງແຕ່ລະຂັ້ນຢ່າງຕໍ່ເນື່ອງ ແລະ ຈັດຕັ້ງປະຕິບັດຕາມ 4 ໜ້າທີ່ໃຫຍ່ 26 ແຜນງານ ທີ່ຄະນະພັກກະຊວງປ້ອງກັນປະເທດວາງອອກ. ວຽກງານປັບປຸງກໍ່ສ້າງພັກ ຄະນະພັກແຕ່ລະຂັ້ນໄດ້ ປັບປຸງກໍ່ສ້າງຕາມ 5 ຫຼັກການ 3 ທິດນຳໃນການກໍ່ສ້າງພັກ ເພື່ອເຮັດໃຫ້ການຈັດຕັ້ງພັກມີຄວາມໜັກແໜ້ນເຂັ້ມແຂງທັງ 4 ດ້ານ, ໃນນັ້ນກໍໄດ້ຖືເອົາການກໍ່ສ້າງໜ່ວຍພັກປອດໃສ ເຂັ້ມແຂງໜັກແໜ້ນ ເປັນໃຈກາງ; ການຂະຫຍາຍພັກ ກົມກອງໄດ້ປະຕິບັດຕາມ 5 ບາດກ້າວໃນການຂະຫຍາຍພັກ ໂດຍເລືອກເຟັ້ນເອົາບຸກຄົນທີ່ມີຜົນງານດີເດັ່ນນຳໜ້າໃນຂະບວນການມະຫາຊົນ ເພື່ອຂະຫຍາຍເຂົ້າເປັນສະມາຊິກພັກ ແລະ ຊີ້ນຳອົງການຈັດຕັ້ງມະຫາຊົນ ເປັນຕົ້ນການແຂ່ງຂັນ 4 ບຸກຂອງຊາວໜຸ່ມ ແລະ ຂໍ້ແຂ່ງຂັນ 3 ດີຂອງແມ່ຍິງ. ວຽກງານອົບຮົມຫັດແອບໃນແຕ່ລະປີ ໄດ້ຈັດຕັ້ງອົບຮົມຫັດແອບຕາມຄຳສັ່ງຂອງກົມໃຫຍ່ເສນາທິການວາງອອກ ພິເສດແມ່ນໄດ້ສຳເລັດການເຝິກອົບຮົມໄລຍະສັ້ນຂອງເຫຼົ່າຮົບພິເສດ ທີ່ທາງສະຫະພັນຣັດເຊຍມາເຝິກອົບຮົມໃຫ້, ໃນນັ້ນກົມກອງກໍໄດ້ນຳກຳລັງຈຳນວນ 216 ສະຫາຍ ໄປເຝິກຊ້ອມຢູ່ວິທະຍາຄານນາຍທະຫານບົກ ກົມມະດຳ ເພື່ອສະແດງຕ້ອນຮັບວັນສ້າງຕັ້ງກອງທັບປະຊາຊົນລາວຄົບຮອບ 75 ປີ. ວຽກງານພາລາ-ເຕັກນິກ ຄະນະພັກ-ຄະນະບັນຊາແຕ່ລະຂັ້ນ ໄດ້ເອົາໃຈໃສ່ປູກລະດົມພະນັກງານ-ນັກຮົບປູກຝັງລ້ຽງສັດ ໂດຍປະຕິບັດຕາມຄຳຂວັນຂອງກົມໃຫຍ່ພາລາທິການກອງທັບທີ່ວ່າ: ເພິ່ງຕົນເອງ, ກຸ້ມຕົນເອງ ແລະ ສ້າງຄວາມເຂັ້ມແຂງດ້ວຍຕົນເອງ; ປັດຈຸບັນກົມກອງສາມາດກຸ້ມຕົນເອງດ້ານຊີ້ນ-ປາ 95% ດ້ານພືດຜັກ 85% ພ້ອມກັນນັ້ນ ກົມກອງຍັງໄດ້ປັບປຸງສະຖານທີ່ຄ້າຍຄູໃຫ້ມີຄວາມສະອາດງາມຕາ, ໄດ້ປົກປັກຮັກສາພາຫະນະແລະອາວຸດລູກກະສູນບໍ່ໃຫ້ເປ່ເພເສຍຫາຍໂດຍບໍ່ມີເຫດຜົນ, ລົງຊຸກຍູ້ຢູ່ບັນດາກົມກອງໃນການປົກປັກຮັກສາ ແລະ ບົວລະບັດຜັດເຊັດພາຫະນະອາວຸດ ລູກກະສູນ ເພື່ອຮັບປະກັນໃຫ້ແກ່ການ ກຽມພ້ອມສູ້ຮົບ ແລະ ເຝິກແອບຮໍ່າຮຽນ.

ທ່ານ ພັອ. ຄຳປານ ແພງພັນ ເລຂາຄະນະພັກ, ຫົວໜ້າການເມືອງກອງພົນໃຫຍ່ລົດຕັງ-ຍານເກາະ 661 ລາຍງານຫຍໍ້ກ່ຽວກັບການເຕີບໃຫຍ່ຂະຫຍາຍຕົວຂອງກອງພົນໃຫຍ່ດັ່ງກ່າວ ແລະ ຜົນງານການເຄື່ອນໄຫວເຮັດໜ້າທີ່ການເມືອງຂອງກົມກອງໃນໄລຍະຜ່ານມາ ເຊິ່ງທ່ານໃຫ້ຮູ້ວ່າ: ກອງພົນໃຫຍ່ລົດຕັງ-ຍານເກາະ 661 ໄດ້ຮັບການປະກາດສ້າງຕັ້ງຂຶ້ນຢ່າງເປັນທາງການ ໃນວັນທີ 28 ຕຸລາ 2016 ພາຍໃຕ້ການເປັນປະທານໃຫ້ກຽດປະກາດສ້າງຕັ້ງໂດຍສະຫາຍ ພົອ. ຈັນສະໝອນ ຈັນຍາລາດ ລັດຖະມົນຕີກະຊວງປ້ອງກັນປະເທດ ຕາມຂໍ້ຕົກລົງສະບັບເລກທີ 2755/ກປທ, ລົງວັນທີ 30 ກໍລະກົດ 2016 ສ້າງຕັ້ງຂຶ້ນໂດຍການສືບທອດມູນເຊື້ອຈາກກອງພັນນ້ອຍ 616, 615, 174 ແລະ ສ້າງຕັ້ງຂຶ້ນຕື່ມ 2 ກອງພັນນ້ອຍ ຄື: 161 ແລະ 162. ໂຄງປະກອບການຈັດຕັ້ງ, ຕຳແໜ່ງງານ ແລະ ຈຳນວນພົນແມ່ນສ້າງຕັ້ງຂຶ້ນຕາມຂໍ້ຕົກລົງຂອງກົມໃຫຍ່ເສນາທິການກອງທັບສະບັບເລກທີ 1312/ກສນ, ລົງວັນທີ 06 ກໍລະກົດ 2016 ເຊັນ ແລະ ປະທັບຕາໂດຍ ຫົວໜ້າກົມໃຫຍ່ເສນາທິການກອງທັບ ພົທ. ສຸວອນ ເລືອງບຸນມີ; ມີຄະນະບັນຊາ 6 ສະຫາຍ, ຄະນະພັກ 9 ສະຫາຍ, ມີ 5 ພະແນກຂຶ້ນກັບ, ປະກອບມີ 37 ຂະແໜງການ, ສ້າງຕັ້ງເປັນ 4 ກອງພັນນ້ອຍ ມີ 3 ກອງພັນນ້ອຍສູ້ຮົບ ແລະ 1 ກອງພັນນ້ອຍຮັບປະກັນເຕັກນິກ; ປະກອບມີຈຳນວນພົນທະຫານ 989 ສະຫາຍ, ພະນັກງານ 509 ສະຫາຍ ຍິງ 104 ສະຫາຍ; ການປະກອບພາຫະນະມີ: ລົດຕັງ, ລົດຫຸ້ມເກາະ, ພາຫະນະຮັບປະກັນສູ້ຮົບ ແລະ ພາຫະນະຮັບໃຊ້ບໍລິຫານ. ພາຍຫຼັງໄດ້ຮັບການສ້າງຕັ້ງຂຶ້ນແລ້ວ ກົມກອງກໍໄດ້ວ່ອງໄວຜັນຂະຫຍາຍຈັດຕັ້ງປະຕິບັດ 4 ໜ້າທີ່ໃຫຍ່ 26 ແຜນງານ ທີ່ຄະນະພັກກະຊວງວາງອອກ ໂດຍຕິດພັນກັບໜ້າທີ່ວິຊາສະເພາະຂອງເຫຼົ່າຮົບ ແລະ ໜ້າທີ່ການເມືອງຂອງກົມກອງເຊິ່ງສະແດງອອກຜົນງານອັນພົ້ນເດັ່ນດັ່ງນີ້: ເຂົ້າຮ່ວມຊ້ອມຮົບທຸກຄັ້ງທີ່ກະຊວງປ້ອງກັນປະເທດຈັດຂຶ້ນ ພິເສດໄດ້ຊ້ອມຮົບຮ່ວມລົດຕັງລາວ-ລັດເຊຍ, ຣັດເຊຍ-ລາວ 3 ຄັ້ງ; ໄປແຂ່ງຂັນກິລາການທະຫານນາໆຊາດ (ແຂ່ງລົດຕັງ) ຢູ່ສະຫະພັນຣັດເຊຍ 6 ຄັ້ງ, ຄັ້ງທີ 4 ສາມາດຍາດມາໄດ້ທີ 2 ຂອງກຸ່ມ; ເຂົ້າຮ່ວມຕ້ານໄພພິບັດທຳມະຊາດຕາມຄຳສັ່ງຂອງຂັ້ນເທິງ; ເຂົ້າຮ່ວມໂຄງການ 01728 ແລະ ເຂົ້າຮ່ວມປ້ອງກັນບັນດາວັນສຳຄັນຂອງຊາດ, ຂອງພັກ ແລະ ຂອງກອງທັບ. ມີຜົນງານສຳເລັດໃນການປັບປຸງກໍ່ສ້າງກົມກອງຫຼາຍດ້ານ ເຊັ່ນ: ການສຶກສາອົບຮົມນຳພາແນວຄິດ, ການປັບປຸງລະບຽບແບບແຜນ, ປັບປຸງລະບົບປະຈຳການກຽມພ້ອມສູ້ຮົບ, ວຽກງານເຝິກອົບຮົມຫັດແອບ, ວຽກງານພາລາທິການແລະເຕັກນິກເດັ່ນກວ່າໝູ່ແມ່ນວຽກງານສິລະປະວັນນະຄະດີ, ກິລາກາຍະກຳ; ວຽກງານຈຸດສຸມຂອງກົມກອງແມ່ນສຸມໃສ່ສ້າງຂະບວນການດ້ານຕ່າງໆເພື່ອຂໍ່ານັບຮັບຕ້ອນວັນສ້າງຕັ້ງກອງທັບຄົບຮອບ 75 ປີ ແລະ ຂໍ່ານັບຮັບຕ້ອນກອງປະຊຸມໃຫຍ່ຄັ້ງທີ II ຂອງກອງພົນໃຫຍ່ 661; ວຽກງານປັບປຸງກົມກອງໃນທຸກດ້ານ; ນຳກຳລັງເຂົ້າຊ້ອມຮົບສະແດງວັນສ້າງຕັ້ງກອງທັບຄົບຮອບ 75 ປີ ແລະ ແຂ່ງຂັນກິລາ; ກຽມຄວາມພ້ອມເປີດກອງປະຊຸມໃຫຍ່ຜູ້ແທນສະມາຊິກພັກຄັ້ງທີ II ທີ່ຈະມາເຖິງໃນເດືອນກຸມພານີ້.

ຈາກນັ້ນ, ທ່ານ ບຸນສອນ ເຜີດລາວັນ ແລະ ທ່ານ ບຸນທາມ ພຸດທະວົງ ໄດ້ຂຶ້ນເຜີຍແຜ່ຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາປະຊາຊົນແຂວງວຽງຈັນ ແລະ ສະພາປະຊາຊົນນະຄອນຫຼວງວຽງຈັນ ຊຸດທີ II ເຊິ່ງໄດ້ຍົກໃຫ້ເຫັນເນື້ອໃນຜົນສຳເລັດຂອງກອງປະຊຸມໃນການຕົກລົງບັນຫາສຳຄັນຕ່າງໆພາຍໃນແຂວງວຽງຈັນ ແລະ ນະຄອນຫຼວງວຽງຈັນ.

ໃນໂອກາດນີ້, ທ່ານ ພົທ. ສຸວອນ ເລືອງບຸນມີ ໄດ້ສະແດງຄວາມຊົມເຊີຍຕໍ່ຜົນງານການເຄື່ອນໄຫວຂອງກອງພົນໃຫຍ່ພິເສດ 497 ທີ່ສາມາດຍາດມາໄດ້ໃນໄລຍະຜ່ານມາ ທັງມີຄຳເຫັນໂອ້ລົມຕໍ່ພະນັກງານຫຼັກແຫຼ່ງ ເຊິ່ງໄດ້ເນັ້ນໜັກຫຼາຍບັນຫາທີ່ສຳຄັນ ໂດຍສະເພາະແມ່ນການຮັກສາມູນເຊື້ອອັນດີງາມ ແລະ ສືບຕໍ່ນຳພາ-ຊີ້ນຳພະນັກງານ, ນາຍ ແລະ ພົນທະຫານ ສ້າງຜົນງານນັບມື້ດີຂຶ້ນເລື້ອຍໆ; ປະຕິບັດໜ້າທີ່ວຽກງານວິຊາສະເພາະທີ່ພັກ-ລັດ ມອບໝາຍໃຫ້ດ້ວຍຄວາມຮັບຜິດຊອບສູງ ແລະ ອື່ນໆ. ພ້ອມດຽວກັນນີ້, ທ່ານຍັງໄດ້ຍົກໃຫ້ເຫັນຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດຊຸດທີ IX, ເປີດໂອກາດໃຫ້ຜູ້ເຂົ້າຮ່ວມ ແລະ ສະມາຊິກສະພາແຫ່ງຊາດ ໄດ້ຖາມ-ຕອບຂໍ້ຂ້ອງໃຈ ແລະ ຂໍ້ສະເໜີຕ່າງໆຢ່າງກົງໄປກົງມາອີກດ້ວຍ.

**(ສອນສັກ ວັນວິໄຊ)**



## ຄະນະຜູ້ແທນ...

(ຕໍ່ຈາກໜ້າ 1)

(ສພຊ) ໃນໂອກາດເດີນທາງໄປຢ້ຽມຢາມ ແລະ ເຮັດວຽກ ຢູ່ ສສ.ຫວຽດນາມ ລະຫວ່າງວັນທີ 02-07 ມັງກອນ 2024 ສະຫາຍ ສຈ. ປອ. ຈະເລີນ ເຢຍປາວເຮີ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ, ປະທານກຳມາທິການກົດໝາຍ, ຫົວໜ້າຄະນະຮັບຜິດຊອບຄົ້ນຄວ້າ ແລະ ຮຽບຮຽງປະຫວັດຄວາມເປັນມາຂອງສະພາແຫ່ງຊາດແຫ່ງ ສປປລາວ ພ້ອມດ້ວຍຄະນະ ໄດ້ເຂົ້າຢ້ຽມຂໍ່ານັບສະຫາຍ ເວືອງ ດິ່ງ ເຫວະ (Vương Đình Huệ) ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ ໃນວັນທີ 04 ມັງກອນຜ່ານມາ, ທີ່ຫໍສະພາແຫ່ງຊາດ ນະຄອນຫຼວງຮ່າໂນ້ຍ.

ປະທານສະພາແຫ່ງຊາດຫວຽດນາມ ສະແດງຄວາມຊົມເຊີຍຕໍ່ການພັດທະນາອັນຈົບງາມໃນການພົວພັນລະຫວ່າງສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ; ຕີລາຄາສູງຕໍ່ຜົນສຳເລັດຂອງກອງປະຊຸມສຸດຍອດລັດຖະສະພາ ກຳປູເຈຍ-ລາວ-ຫວຽດນາມ (CLV) ຄັ້ງທີ 1 ທີ່ໄດ້ຈັດຂຶ້ນຢູ່ນະຄອນຫຼວງວຽງຈັນໃນຕົ້ນເດືອນທັນວາ 2023 ໂດຍສະພາແຫ່ງຊາດລາວເປັນເຈົ້າພາບ, ພາຍໃຕ້ການເປັນປະທານຮ່ວມຂອງ 3 ປະທານສະພາແຫ່ງຊາດ3ປະເທດ; ອວຍພອນໃຫ້ຄະນະຜູ້ແທນສະພາແຫ່ງຊາດລາວ ປະສົບຜົນສຳເລັດຫຼາຍດ້ານໃນການຢ້ຽມຢາມຄັ້ງນີ້.

ສະຫາຍ ສຈ. ປອ. ຈະເລີນເຢຍປາວເຮີສະແດງຄວາມຂອບໃຈປະທານສະພາແຫ່ງຊາດຫວຽດນາມທີ່ໄດ້ເສຍສະຫຼະເວລາອັນມີຄ່າຕ້ອນຮັບ ແລະ ມີການຕີລາຄາອັນຈົບງາມກ່ຽວກັບສາຍພົວພັນມິດຕະພາບທີ່ມີມູນເຊື້ອອັນຍິ່ງໃຫຍ່, ຄວາມສາມັກຄີແບບພິເສດ, ການຮ່ວມມືຮອບດ້ານ ລະຫວ່າງ 2 ພັກ 2 ລັດ ແລະ ປະຊາຊົນ 2 ປະເທດ ກໍຄືຜົນສຳເລັດຂອງກອງປະຊຸມສຸດຍອດລັດຖະສະພາ ກຳປູເຈຍ-ລາວ-ຫວຽດນາມ, ເນັ້ນໜັກວ່າຜົນສຳເລັດຂອງກອງປະຊຸມ ແມ່ນມີການປະກອບສ່ວນອັນໃຫຍ່ຫຼວງ ແລະ ມີຄຸນຄ່າຈາກສະພາແຫ່ງຊາດຫວຽດນາມ. ໃນໂອກາດນີ້, ຮອງປະທານສະພາແຫ່ງຊາດລາວ ໄດ້ສົ່ງຄຳຢ້ຽມຢາມຖາມ



ຂ່າວ ແລະ ຄຳອວຍພອນອັນຈົບງາມຂອງປະທານສະພາແຫ່ງຊາດ ສະຫາຍ ປອ. ໄຊສົມພອນ ພົມວິຫານ ທີ່ຝາກເຖິງປະທານສະພາແຫ່ງຊາດ ສະຫາຍ ເວືອງ ດິ່ງ ເຫວະ ແລະ ບັນດາການນຳຂອງສະພາແຫ່ງຊາດຫວຽດນາມ.

ສະຫາຍ ສຈ. ປອ. ຈະເລີນ ເຢຍປາວເຮີ ລາຍງານໃຫ້ຮູ້ວ່າ: ໃນການຢ້ຽມຢາມຄັ້ງນີ້, ຄະນະຜູ້ແທນສະພາແຫ່ງຊາດລາວ ໄດ້ພົບປະສອງຝ່າຍທີ່ໄດ້ຮັບຜົນສຳເລັດຢ່າງສູງກັບຮອງປະທານສະພາແຫ່ງຊາດ ສະຫາຍ ຫງວຽນ ຄັກ ດິ້ງ (Nguyễn Khắc Định); ພົບປະແລກປ່ຽນຢ່າງມີປະສິດທິຜົນກັບສະຫາຍ ບຸ່ຍ ວັນ ເກື່ອງ (Bùi Văn Cường) ເລຂາທິການສະພາແຫ່ງຊາດ, ຫົວໜ້າຫ້ອງວ່າການສະພາແຫ່ງຊາດ; ເຮັດວຽກກັບສະຖາບັນຄົ້ນຄວ້ານິຕິບັນຍັດ ເພື່ອແລກປ່ຽນປະສົບການໃນການເຄື່ອນໄຫວວຽກງານ, ພິເສດແມ່ນບົດຮຽນໃນການເຄື່ອນໄຫວນິຕິບັນຍັດ, ຮຽບຮຽງປຶ້ມປະຫວັດສະພາແຫ່ງຊາດ ໃນສະພາບການທີ່ສະພາແຫ່ງຊາດລາວກະກຽມດຳເນີນການປັບປຸງລັດຖະທຳມະນູນປີ 2015 ແລະຮຽບຮຽງປຶ້ມປະຫວັດ 50 ປີ ສະພາແຫ່ງຊາດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

ຜ່ານບັນດາການພົບປະເຮັດວຽກ, ຮອງປະທານສະພາແຫ່ງຊາດລາວ ເນັ້ນໜັກວ່າ ສອງຝ່າຍຢືນຢັນອີກເທື່ອໜຶ່ງວ່າຈະສືບຕໍ່ຮ່ວມກັນປົກປັກຮັກສາ, ເພີ່ມພູນຄູນສ້າງ ແລະ ຊຸກຍູ້ສົ່ງເສີມສາຍພົວພັນມິດຕະພາບທີ່ຍິ່ງໃຫຍ່, ຄວາມສາມັກຄີແບບພິເສດ ແລະ ການຮ່ວມມືຮອບດ້ານ ລາວ-ຫວຽດນາມ, ຫວຽດນາມ-ລາວ. ນີ້ແມ່ນຊັບສິນອັນລ້ຳຄ່າຂອງສອງຊາດອ້າຍນ້ອງທີ່ໄດ້ສ້າງຕັ້ງຂຶ້ນໂດຍປະທານ ໂຮ່ ຈິ ມິ່ງ, ປະທານ ໄກສອນ ພົມວິຫານ, ປະທານ ສຸພານຸວົງ; ໄດ້ຮັບການເພີ່ມພູນຄູນສ້າງ, ປົກປັກຮັກສາ ແລະ ທະນຸຖະໜອມຈາກການນຳຮຸ່ນຕ່າງໆຂອງພັກ, ລັດ ແລະ ປະຊາຊົນສອງປະເທດຕະຫຼອດໄລຍະທີ່ຜ່ານມາ ເພື່ອໃຫ້ສາຍພົວພັນລະຫວ່າງສອງພັກ, ສອງປະເທດ ແລະ ປະຊາຊົນສອງຊາດ "ຂຽວສົດງົດງາມ, ໝັ້ນຄົງທະນົງແກ່ນຊົ່ວກາລະນານ". ໃນໂອກາດນີ້, ສະຫາຍ ສຈ. ປອ. ຈະເລີນ ເຢຍປາວເຮີ ກໍໄດ້ສະເໜີໃຫ້ສະພາແຫ່ງຊາດລາວ ແລະ ສະພາແຫ່ງຊາດຫວຽດນາມ ຮ່ວມມືກັນຈັດຕັ້ງຮຽບຮຽງປຶ້ມປະຫວັດສາດກ່ຽວກັບການພົວພັນຮ່ວມມືລະຫວ່າງສະພາແຫ່ງຊາດສອງປະເທດ.

ສະຫາຍ ເວືອງ ດິ່ງ ເຫວະກ່າວວ່າ: ສະພາແຫ່ງຊາດ ແລະ ໃນນາມປະທານສະພາແຫ່ງຊາດ ຍາມໃດກໍຕິດຕາມຢ່າງໃກ້ຊິດ, ຕີລາຄາສູງຄວາມພະຍາຍາມ ແລະບັນດາຜົນງານຂອງສະພາແຫ່ງຊາດລາວ ທີ່ໄດ້ປະກອບສ່ວນສຳຄັນເຂົ້າໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ; ຊົມເຊີຍ ສປປລາວ ບັນລຸໄດ້ໝາກຜົນດີຫຼາຍດ້ານໃນການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ ກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ແລະການແກ້ໄຂບັນຫາຢາເສບຕິດ. ສະຫາຍຢືນຢັນວ່າ, ສະພາແຫ່ງຊາດຫວຽດນາມ ພ້ອມແລ້ວທີ່ຈະແລກປ່ຽນປະສົບການກັບສະພາແຫ່ງຊາດລາວໃນທຸກຂົງເຂດການຮ່ວມມື; ພິເສດແມ່ນການປັບປຸງລັດຖະທຳມະນູນ, ສ້າງ ແລະ ປັບປຸງລະບົບກົດໝາຍໃຫ້ສົມບູນແບບ ແລະ ຮຽບຮຽງປຶ້ມປະຫວັດສະພາແຫ່ງຊາດ. ປັດຈຸບັນ, ສະພາແຫ່ງຊາດຫວຽດນາມ ກໍພວມຕັ້ງໜ້າຮຽບຮຽງປຶ້ມ "ປະຫວັດສາດ 80 ປີ ສະພາແຫ່ງຊາດຫວຽດນາມ" ມີຈຸດປະສົງເພື່ອສະເຫຼີມສະຫຼອງຄົບຮອບ 80 ປີແຫ່ງວັນເລືອກຕັ້ງທົ່ວໄປຄັ້ງທຳອິດເພື່ອເລືອກຕັ້ງສະພາແຫ່ງຊາດຫວຽດນາມ (06/01/1946-06/01/2026) ໃນນັ້ນ ມີການຈັດຕັ້ງປະຕິບັດໂຄງການຄົ້ນຄວ້າຫົວຂໍ້ວິທະຍາສາດຂັ້ນກະຊວງ ເພື່ອເປັນພື້ນຖານທາງດ້ານວິທະຍາສາດໃຫ້ແກ່ການຮຽບຮຽງປຶ້ມປະຫວັດສາດ 80 ປີຂອງສະພາແຫ່ງຊາດຫວຽດນາມ.

ສະຫາຍ ເວືອງ ດິ່ງ ເຫວະ ສະແດງຄວາມເຫັນດີເປັນເອກະພາບກັບຂໍ້ສະເໜີ ແລະຂໍ້ລິເລີ່ມຂອງຮອງປະທານສະພາແຫ່ງຊາດລາວ ກ່ຽວກັບການຮຽບຮຽງປຶ້ມປະຫວັດສາດການພົວພັນລະຫວ່າງສະພາແຫ່ງຊາດສອງປະເທດ ແລະ ຈະລາຍງານຕໍ່ຄະນະພັກສະພາແຫ່ງຊາດໂດຍໄວກ່ຽວກັບວຽກນີ້, ເຊື່ອໝັ້ນວ່າຖ້າປຶ້ມຫົວນີ້ໄດ້ຈັດພິມຈະມີຄວາມໝາຍອັນໃຫຍ່ຫຼວງເນື່ອງໃນໂອກາດສະເຫຼີມສະຫຼອງຄົບຮອບ 50 ປີແຫ່ງວັນສ້າງຕັ້ງ ແລະ ການພັດທະນາສະພາແຫ່ງຊາດລາວ ທັງເປັນປະຫວັດສາດເຄິ່ງສະຕະວັດແຫ່ງການຮ່ວມມືລະຫວ່າງສະພາແຫ່ງຊາດຂອງສອງປະເທດ.

ໂດຍເນັ້ນຢ້ຳວ່າໃນປີ 2024 ສປປລາວ ຈະຮັບໜ້າທີ່ເປັນປະທານອາຊຽນ ແລະ ປະທານໄອປາ, ປະທານສະພາແຫ່ງຊາດຫວຽດນາມຢືນຢັນວ່າ: ຫວຽດນາມ ຍາມໃດກໍສະໜັບສະໜູນ ແລະ ຈະຊ່ວຍເຫຼືອລາວ ໃນການປະຕິບັດໜ້າທີ່ທີ່ສຳຄັນໃຫ້ປະສົບຜົນສຳເລັດຢ່າງຈົບງາມ; ສະແດງຄວາມຂອບໃຈຢ່າງຈິງໃຈຕໍ່ຄຳຢ້ຽມຢາມຖາມຂ່າວ ແລະ ຄຳອວຍພອນອັນຈົບງາມຂອງປະທານສະພາແຫ່ງຊາດລາວ, ສະຫາຍ ເວືອງ ດິ່ງ ເຫວະ ໄດ້ຝາກຄຳຢ້ຽມຢາມຖາມຂ່າວ ແລະ ຄຳອວຍພອນອັນຈົບງາມ ໄປຍັງປະທານສະພາແຫ່ງຊາດ ສະຫາຍ ປອ. ໄຊສົມພອນ ພົມວິຫານ ແລະ ບັນດາການນຳຂອງສະພາແຫ່ງຊາດລາວ.

ໃນວັນດຽວກັນ, ສະຫາຍ ສຈ. ປອ. ຈະເລີນ ເຢຍປາວເຮີ ພ້ອມດ້ວຍຄະນະ ຍັງໄດ້ພົບປະ ແລະ ເຮັດວຽກກັບຄະນະຜູ້ແທນຫວຽດນາມ ນຳໂດຍສະຫາຍ ຫງວຽນ ຄັກ ດິ້ງ (Nguyễn Khắc Định) ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ ເຊິ່ງສະຫາຍ ຫງວຽນ ຄັກ ດິ້ງ ໄດ້ສະແດງຄວາມຍິນດີທີ່ໄດ້ຕ້ອນຮັບສະຫາຍຮອງປະທານສະພາແຫ່ງຊາດລາວ ເຊິ່ງເປັນຜູ້ແທນຕ່າງປະເທດຄະນະທຳອິດຂອງສະພາແຫ່ງຊາດຫວຽດນາມໃນປີ 2024 ທີ່ມາຢ້ຽມຢາມ ແລະ ເຮັດວຽກຢູ່ຫວຽດນາມ. ຮອງປະທານສະພາແຫ່ງຊາດ ເນັ້ນໜັກເຖິງການພົບປະແລກປ່ຽນຄະນະຜູ້ແທນຂັ້ນສູງ ແລະ ບັນດາຄະນະຜູ້ແທນ ເພື່ອແລກປ່ຽນປະສົບການໃນການປະຕິບັດໜ້າທີ່ວຽກງານ, ຈັດກອງປະຊຸມສຳມະນາຫົວຂໍ້ຕ່າງໆ, ການພົບປະເຮັດວຽກໂດຍກົງລະຫວ່າງບັນດາກຳມາທິການ ແລະ ອົງການຈັດຕັ້ງຂອງສະພາແຫ່ງຊາດສອງປະເທດຢ່າງປົກກະຕິ ຈະເປັນປະກອບສ່ວນນຳເອົາໝາກຜົນແຫ່ງການຮ່ວມມືລະຫວ່າງສະພາແຫ່ງຊາດສອງປະເທດໃຫ້ເຂົ້າສູ່ລວງເລິກ ແລະ ແທດຕົວຈິງທີ່ສຸດ, ສະແດງໃຫ້ເຫັນຄວາມໄວ້ເນື້ອເຊື່ອໃຈ ແລະ ຄວາມໃກ້ຊິດລະຫວ່າງສອງສະພາແຫ່ງຊາດ.

ສະຫາຍ ສຈ. ປອ. ຈະເລີນ ເຢຍປາວເຮີ ໄດ້ສະແດງຄວາມຂອບໃຈທ່ານຮອງປະທານສະພາແຫ່ງຊາດ ຫງວຽນ ຄັກ ດິ້ງ ທີ່ໃຫ້ການຕ້ອນຮັບຢ່າງອົບອຸ່ນ. ພ້ອມກັນນັ້ນ, ກໍແຈ້ງຈຸດປະສົງຂອງການຢ້ຽມຢາມແມ່ນເພື່ອແລກປ່ຽນ, ແບ່ງປັນ, ຮັບເອົາບັນດາບົດຮຽນທີ່ດີ ແລະ ປະສົບການອັນລ້ຳຄ່າໃນວຽກງານການຄົ້ນຄວ້ານິຕິບັນຍັດ, ປັບປຸງລັດຖະທຳມະນູນ ແລະ ລະບົບກົດໝາຍ ກໍຄືການສັງລວມຂໍ້ມູນຮັບໃຊ້ໃຫ້ແກ່ການສ້າງ, ຮຽບຮຽງເອກະສານປະຫວັດ 50 ປີ ແຫ່ງການເຕີບໃຫຍ່ ແລະ ການພັດທະນາຂອງສະພາແຫ່ງຊາດລາວ; ປະກອບສ່ວນເພີ່ມທະວີສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີແບບພິເສດ ແລະ ການຮ່ວມມືຮອບດ້ານລະຫວ່າງພັກ, ລັດ ແລະ ປະຊາຊົນ ລາວ-ຫວຽດນາມ.

ສະຫາຍ ຫງວຽນ ຄັກ ດິ້ງ ກ່າວເຖິງວຽກງານສ້າງກົດໝາຍວ່າ: ບັນດາອົງການຈັດຕັ້ງຂອງສະພາແຫ່ງຊາດຫວຽດນາມ ລ້ວນແຕ່ມີພາລະບົດບາດ, ໜ້າທີ່ ສ້າງ ແລະ ປັບປຸງກົດໝາຍ ໂດຍມີກຳມາທິການກົດໝາຍເປັນຈຸດໃຈກາງ. ໃນອາຍຸການຂອງສະພາແຫ່ງຊາດຊຸດທີ XV, ພາຍໃຕ້ການຊີ້ນຳຂອງສະຫາຍປະທານສະພາແຫ່ງຊາດ ເວືອງ ດິ່ງ ເຫວະ (Vương Đình Hu), ສະພາແຫ່ງຊາດຫວຽດນາມ ໄດ້ເສີມຂະຫຍາຍບົດບາດຂອງສະຖາບັນຄົ້ນຄວ້ານິຕິບັນຍັດ-ອົງການຄົ້ນຄວ້າວິທະຍາສາດວຽກງານນິຕິບັນຍັດ; ສະຖາບັນຄົ້ນຄວ້ານິຕິບັນຍັດ ແລະ ຫໍສະໝຸດຂອງສະພາແຫ່ງຊາດ ກໍໄດ້ສະໜອງເອກະສານຄົ້ນຄວ້າໃຫ້ແກ່ບັນດາສະມາຊິກສະພາແຫ່ງຊາດ (ສສຊ) ເປັນປະຈຳ, ຊ່ວຍໃຫ້ ສສຊ ມີການປະກອບຄຳຄິດຄຳເຫັນ ແລະ ອະພິປາຍທີ່ມີຄຸນນະພາບສູງ. ສະຫາຍຍັງໄດ້ມີຄຳເຫັນກ່ຽວກັບບາງປະສົບການໃນການໂຄສະນາເຜີຍແຜ່ຂໍ້ມູນ ແລະ ສັງລວມເອກະສານເພື່ອຮັບໃຊ້ການຮຽບຮຽງປະຫວັດຂອງສະພາແຫ່ງຊາດ ວ່າ: ສະພາແຫ່ງຊາດຫວຽດນາມ ກໍພວມດຳເນີນບັນດາວຽກງານກະກຽມສະເຫຼີມສະຫຼອງ 80 ປີແຫ່ງການເລືອກຕັ້ງສະພາແຫ່ງຊາດຄັ້ງທຳອິດ ໃນເດືອນມັງກອນ 2026, ໃນນັ້ນມີວຽກງານຮຽບຮຽງປະຫວັດ 80 ປີຂອງສະພາແຫ່ງຊາດຫວຽດນາມ; ໂດຍເນັ້ນໜັກວ່າ, ນີ້ແມ່ນວຽກງານສຳຄັນທີ່ສຸດ, ມີຄວາມໝາຍທາງດ້ານການເມືອງອັນໃຫຍ່ຫຼວງ, ຮຽກຮ້ອງໃຫ້ມີຄວາມຕັ້ງໃຈສູງ.

ສະຫາຍ ສຈ. ປອ. ຈະເລີນເຢຍປາວເຮີສະແດງຄວາມຂອບໃຈສະຫາຍຮອງປະທານສະພາແຫ່ງຊາດຫວຽດນາມ ທີ່ໄດ້ແບ່ງປັນປະສົບການດ້ວຍນ້ຳໃຈ, ພ້ອມໃຫ້ການຮ່ວມມືສະເໜີ ແລະ ຄຽງຂ້າງສະພາແຫ່ງຊາດລາວ; ຜ່ານການໂອ້ລົມສົນທະນາ, ຄະນະຜູ້ແທນໄດ້ຖອດຖອນເອົາບົດຮຽນ ແລະ ປະສົບການອັນລ້ຳຄ່າຫຼາຍຢ່າງ, ໂດຍສະເພາະແມ່ນເນື້ອໃນສຳຄັນທີ່ສຸດກ່ຽວກັບການຄົ້ນຄວ້າສ້າງ, ປັບປຸງລະບົບກົດໝາຍ ແລະ ຮຽບຮຽງປະຫວັດຂອງສະພາແຫ່ງຊາດ. ສະຫາຍ ສຈ. ປອ. ຈະເລີນ ເຢຍປາວເຮີ ໄດ້ແຈ້ງໃຫ້ຮູ້ວ່າ: ປີ 2024 ສະພາແຫ່ງຊາດລາວ ຈະດຳລົງຕຳແໜ່ງເປັນປະທານໄອປາ (AIPA) ແລະ ຈັດກອງປະຊຸມໃຫຍ່ໄອປາຄັ້ງທີ 45, ຫວັງວ່າສະພາແຫ່ງຊາດຫວຽດນາມ ຈະສືບຕໍ່ສະໜັບສະໜູນ ແລະ ແບ່ງປັນປະສົບການໃຫ້ແກ່ສະພາແຫ່ງຊາດລາວ ຈັດຕັ້ງກິດຈະກຳທີ່ສຳຄັນນີ້ປະສົບຜົນສຳເລັດ.

# ກອງປະຊຸມສະໄໝສາມັນເທື່ອທີ 6 ສະພາປະຊາຊົນແຂວງວຽງຈັນ ຊຸດທີ II



(ສພຊ) ສະພາປະຊາຊົນແຂວງວຽງຈັນ ໄດ້ໄຂກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາປະຊາຊົນແຂວງວຽງຈັນ ຊຸດທີ II ໃນຕອນເຊົ້າຂອງວັນທີ 26 ທັນວາ 2023 ທີ່ສະໂມສອນໃຫຍ່ຫ້ອງວ່າການແຂວງວຽງຈັນ ໂດຍການເປັນປະທານຂອງທ່ານ ບຸນສອນ ເພັດລາວັນ ປະທານສະພາປະຊາຊົນແຂວງວຽງຈັນ;ເຂົ້າຮ່ວມມີທ່ານ ຄຳພັນ ສິດທິດຳພາ ກຳມະການສູນກາງພັກ, ເລຂາຄະນະບໍລິຫານງານພັກແຂວງ,ເຈົ້າແຂວງວຽງຈັນ, ມີບັນດາທ່ານຄະນະປະຈຳພັກແຂວງ, ກຳມະການພັກແຂວງ, ສະມາຊິກສະພາແຫ່ງຊາດ ຊຸດທີ IX ປະຈຳເຂດເລືອກຕັ້ງທີ 10 ແຂວງວຽງຈັນ, ສະມາຊິກສະພາປະຊາຊົນແຂວງວຽງຈັນ ຊຸດທີ II, ເຈົ້າເມືອງ, ຫົວໜ້າ-ຮອງຫົວໜ້າພະແນກການ, ອົງການ, ກົມກອງ ແລະ ພະນັກງານວິຊາການທີ່ຮັບຜິດຊອບກອງປະຊຸມເຂົ້າຮ່ວມຢ່າງພ້ອມພຽງ.

ປະທານກອງປະຊຸມໄດ້ກ່າວເປີດກອງປະຊຸມສະໄໝສາມັນເທື່ອ 6 ຂອງສະພາປະຊາຊົນແຂວງວຽງຈັນ ຊຸດທີ II ຢ່າງເປັນທາງການ ທ່ານໃຫ້ຮູ້ວ່າ: ກອງປະຊຸມໃນຄັ້ງນີ້ ໄດ້ໄຂຂຶ້ນໃນທ່າມກາງບັນຍາກາດທີ່ທົ່ວພັກ, ທົ່ວລັດ, ທົ່ວກຳລັງປະກອບອາວຸດ ແລະ ທົ່ວປວງຊົນລາວບັນດາເຜົ່າພວມສຸມໃສ່ຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກ, ສຸມໃສ່ຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງທີ VI ຂອງຄະນະບໍລິຫານງານພັກແຂວງ, ມະຕິກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ XI ແລະ ສະພາປະຊາຊົນແຂວງ ຊຸດທີ II ກໍຄືແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ 5 ປີ ຂອງແຂວງ ທີ່ຕິດພັນກັບການຈັດຕັ້ງປະຕິບັດສອງວາລະແຫ່ງຊາດ; ກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາປະຊາຊົນແຂວງ ຊຸດທີ II ຄັ້ງນີ້ ຈະໄດ້ຮັບຟັງການລາຍງານບັນດາເນື້ອໃນທີ່ສຳຄັນ ແລະ ພົ້ນເດັ່ນດັ່ງນີ້:

ຮັບຟັງການລາຍງານຂອງທ່ານເຈົ້າແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດຂອງແຂວງປະຈຳປີ 2023 ແລະ ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດຂອງແຂວງ ປະຈຳປີ 2024; ບົດລາຍງານຂອງແຂວງກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມປະຈຳປີ 2023 ແລະ ທິດທາງແຜນການປະຈຳປີ 2024; ບົດລາຍງານຂອງແຂວງກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດປະຈຳປີ 2023 ແລະ ທິດທາງແຜນການປະຈຳປີ 2024; ບົດລາຍງານການຈັດຕັ້ງປະຕິບັດການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ; ບົດລາຍງານການຈັດຕັ້ງປະຕິບັດການແກ້ໄຂບັນຫາຢາເສບຕິດ; ບົດລາຍງານຂອງອົງການກວດສອບປະຈຳພາກກາງ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານກາງສະໄໝ 5 ປີ (2021-2025) ແລະ ທິດທາງແຜນການທ້າຍສະໄໝຮອດປີ 2025; ການຈັດຕັ້ງປະຕິບັດວຽກງານປະຈຳປີ 2023 ແລະ ທິດທາງແຜນການປະຈຳປີ 2024, ລາຍງານຜົນການກວດສອບປະຈຳປີ 2022; ບົດລາຍງານຂອງອົງການກວດກາລັດແຂວງວຽງຈັນ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານກາງສະໄໝ 5 ປີ (2021-2025), ທິດທາງແຜນການທ້າຍສະໄໝຮອດປີ 2025; ການຈັດຕັ້ງປະຕິບັດແຜນການປະຈຳປີ 2023 ແລະ ທິດທາງແຜນການປະຈຳປີ 2024, ລາຍງານບັນຫາການແກ້ໄຂຜົນການກວດກາ ປະຈຳປີ 2021 ແລະ ປະຈຳປີ 2022; ບົດລາຍງານຂອງອົງການໄອຍະການປະຊາຊົນແຂວງກ່ຽວກັບການຈັດຕັ້ງປະຕິບັດວຽກງານປະຈຳປີ 2023 ແລະ ທິດທາງແຜນການປະຈຳປີ 2024; ບົດລາຍງານຂອງສານປະຊາຊົນແຂວງກ່ຽວກັບການຈັດຕັ້ງປະຕິບັດວຽກງານປະຈຳປີ 2023 ແລະ ທິດທາງແຜນການປະຈຳປີ 2024; ບົດລາຍງານຂອງສະພາປະຊາຊົນແຂວງກ່ຽວກັບການເຄື່ອນໄຫວວຽກງານປະຈຳປີ 2023 ແລະ ທິດທາງແຜນການປະຈຳປີ 2024.

ກອງປະຊຸມຄັ້ງນີ້ ໄດ້ດຳເນີນເປັນເວລາ 4 ວັນ ເຊິ່ງສະມາຊິກສະພາປະຊາຊົນແຂວງ ຊຸດທີ II ໄດ້ນຳໃຊ້ສິດປະຊາທິປະໄຕ ແລະ ເຊີດຊູຄວາມຮັບຜິດຊອບຂອງຕົນໃນການຄົ້ນຄວ້າ, ປະກອບຄຳເຫັນຢ່າງຖີ່ຖ້ວນ ຢ່າງພາວະວິໄສ ແລະ ເລິກເຊິ່ງ ບົນພື້ນຖານແນວທາງນະໂຍບາຍລະບຽບກົດໝາຍ ແລະ ສະພາບຄວາມເປັນຈິງທາງດ້ານເສດຖະກິດ- ສັງຄົມຂອງແຂວງວຽງຈັນໃນປັດຈຸບັນ ເພື່ອເຮັດໃຫ້ເນື້ອໃນທີ່ຈະນຳມາພິຈາລະນາ, ຮັບຮອງໃນຄັ້ງນີ້ມີຄວາມສົມບູນ ແລະ ໜັກແໜ້ນ ຈຶ່ງຂໍເຊີນຊວນປະຊາຊົນບັນດາເຜົ່າ ພາຍໃນແຂວງວຽງຈັນ ຈົ່ງຕິດຕາມກອງປະຊຸມສະໄໝສາມັນເທື່ອ 6 ຂອງສະພາປະຊາຊົນແຂວງຊຸດທີ II ຈົນສຳເລັດ ພ້ອມທັງເປີດກວ້າງໃຫ້ຜູ້ມີສິດເລືອກຕັ້ງ ມີຄຳຄິດຄຳເຫັນ ແລະ ສະເໜີຜ່ານໂທລະສັບສາຍດ່ວນ 023 156 ໃນໄລຍະດຳເນີນກອງປະຊຸມນີ້ຕື່ມອີກ.

**(ນາງ ບຸລາຕີ ແລະ ຄຳພັນ)**

# ກອງປະຊຸມວິສາມັນຂອງຄະນະປະຈຳ ສະພາປະຊາຊົນແຂວງອຸດົມໄຊ



(ສພຊ) ໃນວັນທີ 13 ທັນວາ 2023 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງອຸດົມໄຊ, ໄດ້ມີກອງປະຊຸມວິສາມັນຂອງຄະນະປະຈຳສະພາປະຊາຊົນແຂວງ, ໂດຍການເປັນປະທານຂອງທ່ານ ຄຳດີ ວົງລ້ອມ ປະທານສະພາປະຊາຊົນແຂວງ, ເຂົ້າຮ່ວມມີບັນດາຄະນະປະຈຳສະພາປະຊາຊົນແຂວງ, ບັນດາພະແນກການທີ່ກ່ຽວຂ້ອງ ພ້ອມດ້ວຍພະນັກງານວິຊາການຈຳນວນໜຶ່ງ.

ຈຸດປະສົງຂອງກອງປະຊຸມແມ່ນເພື່ອເປັນການຄົ້ນຄວ້າ, ພິຈາລະນາໜັງສືສະເໜີຂອງທ່ານເຈົ້າແຂວງອຸດົມໄຊ ກ່ຽວກັບການສະເໜີສະດັດແກ້ມູນຄ່າເພີ່ມ ແລະ ຫຼຸດໂຄງການລົງທຶນຂອງລັດ ເຊິ່ງປະກອບມີ 2 ໂຄງການຄື: ໂຄງການຈັດສັນອາຊີບ, ຍົກຍ້າຍ-ເຕົ້າໂຮມປະຊາຊົນຈຸດສຸມ ບ້ານຫ້ວຍໄລ່ ເມືອງງາ ແຂວງອຸດົມໄຊ, ເປັນໂຄງການປະເພດ V; ໂຄງການປັບປຸງປູຢາງ 2 ຊັ້ນ ເສັ້ນທາງເລກທີ 1901 (ສີ່ແຍກບ້ານໜອງແມງດາຫາຫໍພັກທະນາຄານແຫ່ງ ສປປ ລາວ) ມີຄວາມຍາວ 1,10 ກມ ໄລຍະການຈັດຕັ້ງປະຕິບັດ 2023-2025.

ໃນກອງປະຊຸມ ທ່ານ ທອງໄຊ ທໍ່ຈິງເລ່ຍຈີ ປະທານຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ ສະພາປະຊາຊົນແຂວງ ໄດ້ຕາງໜ້າຄະນະກຳມະການລາຍງານໃຫ້ຮູ້ວ່າ: ຜ່ານການຄົ້ນຄວ້າບັນດາເນື້ອໃນ ແລະ ເອກະສານຕ່າງໆ ກ່ຽວກັບໜັງສືສະເໜີຂອງເຈົ້າແຂວງ-ແຂວງອຸດົມໄຊ ສະບັບເລກທີ 1512/ອຊ, ລົງວັນທີ 20 ພະຈິກ 2023 ແລະ 1597/ອຊ, ລົງວັນທີ 07 ທັນວາ 2023 ເພື່ອໃຫ້ສະພາປະຊາຊົນແຂວງ ພິຈາລະນາຮັບຮອງເຫັນວ່າບັນດາໂຄງການຖືກຕາມກົດໝາຍວ່າດ້ວຍການລົງທຶນຂອງລັດ ສະບັບເລກທີ 72/ສພຊ, ລົງວັນທີ 15 ທັນວາ 2015, ມາດຕາ 54 ການດັດແກ້ມູນຄ່າໂຄງການລົງທຶນຂອງລັດ ຂໍ້ 1 ຂີດໝ້າທີ 4 ລະບຸວ່າ: ສະພາປະຊາຊົນຂັ້ນແຂວງ ພິຈາລະນາດັດແກ້ໃນມູນຄ່າຂອງການດັດແກ້ແຕ່ 5 ຕື້ກີບລົງມາ, ສຳລັບໂຄງການລົງທຶນປະເພດ V ຂອງອົງການປົກຄອງທ້ອງຖິ່ນ ຕາມການສະເໜີຂອງເຈົ້າແຂວງ ຫຼື ເຈົ້າຄອງນະຄອນຫຼວງ ແລະ ສາເຫດຂອງການດັດແກ້ໂຄງການຖືກຕ້ອງ ແລະ ສອດຄ່ອງຕາມ ມາດຕາ 54 ຂໍ້ 2 ຂີດໝ້າທີ 1 ກຳນົດວ່າລາຄາວັດສະດຸກໍ່ສ້າງໃນຕະຫຼາດເພີ່ມຂຶ້ນເກີນກວ່າ 15% ຂອງລາຄາໃນວັນເຊັນສັນຍາ ແລະ ດ້ານອື່ນໆ.

ຈາກນັ້ນ, ບັນດາຜູ້ເຂົ້າຮ່ວມກອງປະຊຸມໄດ້ປະກອບຄຳເຫັນ ແລະ ບັນດາພະແນກການໄດ້ມີຄຳເຫັນເພີ່ມເຕີມ ແລະ ຊີ້ແຈງ ຕໍ່ການມີຄຳເຫັນຂອງບັນດາທ່ານໃນຄະນະປະຈຳສະພາປະຊາຊົນແຂວງຢ່າງກົງໄປກົງມາ.

**(ນັກຂ່າວ ສພຊ)**

# ພົບປະ ແລະ ເຊັນບົດບັນທຶກຮ່ວມມືມິດຕະພາບ ລະຫວ່າງສອງສະພາປະຊາຊົນລາວ-ຈີນ



(ສພຊ) ໃນວັນທີ 7 ທັນວາ 2023 ສະຫາຍ ຟາງ ຊຸນ ມິງ ຮອງປະທານສະພາຜູ້ແທນປະຊາຊົນເຂດປົກຄອງຕົນເອງ ເຜົ່າຈ້ວງກວາງຊີ ແຫ່ງ ສປ ຈີນ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວມາຢ້ຽມຢາມ ແລະ ເຮັດວຽກ ຢູ່ແຂວງຫຼວງພະບາງ, ສປປ ລາວ ໂດຍການຕ້ອນຮັບຂອງສະຫາຍ ສິງຕັນ ໄຊລືຊົ່ງ ຮອງປະທານສະພາປະຊາຊົນແຂວງຫຼວງພະບາງ ພ້ອມດ້ວຍຄະນະ.

ໃນການເຄື່ອນໄຫວເຮັດວຽກຢູ່ ສປປ ລາວ ໃນຄັ້ງນີ້ ກໍເພື່ອເປັນການພົບປະແລກປ່ຽນບົດຮຽນ ແລະ ລົງນາມຮ່ວມກັນ ໃສ່ບົດບັນທຶກການຮ່ວມມືເບື້ອງຕົ້ນ ລະຫວ່າງ ສະພາຜູ້ແທນປະຊາຊົນ ເຂດປົກຄອງຕົນເອງ ເຜົ່າຈ້ວງກວາງຊີ ແຫ່ງ ສປ ຈີນ ກັບ ສະພາປະຊາຊົນແຂວງຫຼວງພະບາງ ເຊິ່ງຈະເປັນບາດກ້າວ ແລະ ຂີດໝາຍອັນສຳຄັນ ທີ່ຈະເຮັດໃຫ້ການພົວພັນຮ່ວມມື, ຊ່ວຍເຫຼືອເຊິ່ງກັນແລະກັນ, ທັງເປັນການຍົກສູງ, ພັດທະນາວຽກງານສະພາປະຊາຊົນແຂວງ ໃຫ້ກ້າວເຂົ້າສູ່ລ່ວງເລິກ ພາຍໃຕ້ແນວທາງນະໂຍບາຍຮ່ວມມືຂອງສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ຕາມນະໂຍບາຍໜຶ່ງແລວໜຶ່ງເສັ້ນທາງ.

## ຕິດຕາມກວດກາການຈັດຕັ້ງປະຕິບັດການລົງທຶນ ຢູ່ 2 ເມືອງ ຂອງແຂວງຜົ້ງສາລີ



(ສພຊ) ໃນລະຫວ່າງວັນທີ 14-17 ທັນວາ 2023 ທ່ານ ທອງສີ ເສົາສຸລິພົມ ປະທານສະພາປະຊາຊົນແຂວງຜົ້ງສາລີ ພ້ອມດ້ວຍຄະນະ ໄດ້ລົງຕິດຕາມກວດກາການຈັດຕັ້ງປະຕິບັດການລົງທຶນຂອງລັດ ແລະ ການລົງທຶນຂອງພາກເອກະຊົນ ປະຈຳ 6 ເດືອນທ້າຍປີ 2023 ທີ່ເມືອງບຸນເໜືອ ແລະ ເມືອງຜົ້ງສາລີ ແຂວງຜົ້ງສາລີ.

ການລົງຕິດຕາມກວດກາຄັ້ງນີ້, ໄດ້ສົມທົບກັບຄະນະນຳຂັ້ນເມືອງ, ຂັ້ນແຂວງ ແລະ ບໍລິສັດ ເພື່ອລົງຊຸກຍູ້ ແລະ ຕິດຕາມກວດກາຕົວຈິງ ຢູ່ພາກສະໜາມ ຄື: ທີ່ເມືອງບຸນເໜືອ ໄດ້ລົງຕິດຕາມກວດກາໂຄງການກໍ່ສ້າງເສັ້ນທາງແຕ່ແຍກທາງ 19 ຫາບ້ານບຸນພຽງ, ໂຄງການກໍ່ສ້າງຕັດຜັງບ້ານ, ການກໍ່ສ້າງຂົວ ທາງເຂົ້າບ້ານຫ້ວຍກັດ ແລະ ໂຄງການຂຸດຄົ້ນ, ປຸງແຕ່ງແຮ່ທອງ ເຂດບ້ານນ້ຳຢອງເກົ່າ; ສຳລັບເມືອງຜົ້ງສາລີ ໄດ້ລົງຕິດຕາມກວດກາໂຄງການກໍ່ສ້າງທະລຸເສັ້ນທາງ, ປູແຮ່, ວ່າງທໍ່ ແຕ່ບ້ານຜົ້ງແຊັກຫາບ້ານຫາດກໍ່, ໂຄງການຂຸດຄົ້ນ ປຸງແຕ່ງຖ່ານຫີນ ເຂດຫຼັກ 5, ໂຄງການສຳຫຼວດຖ່ານຫີນຢູ່ເຂດບ້ານເປີຍິນຊ່າງເກົ່າ, ບ້ານເປີຍິນຊ່າງໃໝ່ ແລະ ບ້ານຈາຄຳປ່າ ແລະ ໂຄງການກໍ່ສ້າງເສັ້ນທາງ, ປູແຮ່, ວ່າງທໍ່ ແຕ່ບ້ານຢາວຟາງຫາບ້ານເລົາແທນ.

ຜ່ານການລົງພາກສະໜາມຕົວຈິງ ແລະ ຮັບຟັງການລາຍງານ ເຫັນໄດ້ເຖິງສະພາບການຈັດຕັ້ງປະຕິບັດຕົວຈິງຂອງບັນດາໂຄງການ, ລວມທັງຂໍ້ສະດວກ, ຂໍ້ຫຍຸ້ງຍາກຕ່າງໆ ແລະ ຂໍ້ສະເໜີຂອງເຈົ້າຂອງໂຄງການ ຫຼື ບໍລິສັດ ທີ່ຈະນຳສະເໜີຕໍ່ຄະນະປະຈຳສະພາປະຊາຊົນແຂວງພິຈາລະນາ ຕາມພາລະບົດບາດ.

**(ສູນທອງ)**

## ສະມາຊິກສະພາປະຊາຊົນແຂວງອຸດົມໄຊ ໄດ້ຮັບການເຝິກອົບຮົມສ້າງຄວາມເຂັ້ມແຂງ



(ສພຊ) ກອງປະຊຸມເຝິກອົບຮົມສ້າງຄວາມເຂັ້ມແຂງໃຫ້ແກ່ສະມາຊິກສະພາປະຊາຊົນແຂວງ ໃນການຕິດຕາມກວດກາການຈັດຕັ້ງປະຕິບັດການຊີ້ແຈງຂອງການຈັດຕັ້ງກ່ຽວຂ້ອງ ແລະ ບຸກຄະລາກອນທີ່ສະພາປະຊາຊົນແຂວງເລືອກຕັ້ງ ແລະ ຮັບຮອງເອົາການແຕ່ງຕັ້ງ ໄດ້ຈັດຂຶ້ນວັນທີ 14 ທັນວາ 2023 ທີ່ສະໂມສອນເມືອງງາ ແຂວງອຸດົມໄຊ ໂດຍການເປັນປະທານຂອງທ່ານ ຄຳດີ ວົງລ້ອມ ປະທານສະພາປະຊາຊົນແຂວງ, ເຂົ້າຮ່ວມມີສະຫາຍຄຳເຜີຍ ງອນວັນຄຳ ຮອງປະທານສະພາປະຊາຊົນແຂວງ, ບັນດາທ່ານຄະນະປະຈຳສະພາປະຊາຊົນແຂວງ, ສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງ 7 ເມືອງ, ຄະນະເລຂາທິການ, ຫົວໜ້າ-ຮອງຫົວໜ້າຂະແໜງ ແລະ ພະນັກງານວິຊາການພາຍໃນສະພາປະຊາຊົນແຂວງ.

ຈຸດປະສົງຂອງກອງປະຊຸມແມ່ນເພື່ອຈັດຕັ້ງເຊື່ອມຊຶມພາລະບົດບາດໃນການຕິດຕາມກວດກາຂອງວຽກງານຂອງສະມາຊິກສະພາປະຊາຊົນແຂວງໃນວາລະກອງປະຊຸມສະໄໝສາມັນແຕ່ລະຄັ້ງ, ໃຫ້ກຳໄດ້ຫຼັກການ, ຂັ້ນຕອນ ແລະ ວິທີການຕິດຕາມກວດກາ ຕາມການລາຍງານຂອງອົງການປົກຄອງແຂວງ ແລະ ຕາມການສະເໜີຂອງພໍ່ແມ່ປະຊາຊົນ; ການຊັກຖາມ ແລະ ຕິດຕາມກວດກາການຊີ້ແຈງຂອງອົງການປົກຄອງໃນກອງປະຊຸມສະໄໝສາມັນແຕ່ລະຄັ້ງໃຫ້ຮັດກຸມ, ມີປະສິດທິຜົນສູງ ແລະ ເພື່ອຈັດຕັ້ງປະຕິບັດການລົງຄະນະແນນຄວາມໄວ້ວາງໃຈໃຫ້ໄປລວງດຽວກັນ ຮັບປະກັນດ້ານເນື້ອໃນ, ຄຸນນະພາບ ແລະ ທັນກັບເວລາ, ພ້ອມທັງເປັນການເປີດກ້ວາງໃຫ້ບັນດາສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງ 7 ເມືອງ ສົນທະນາແລກປ່ຽນບົດຮຽນເຊິ່ງກັນແລະກັນ ໃຫ້ເລິກເຊິ່ງກວ່າເກົ່າ.

ໃນກອງປະຊຸມ ທ່ານ ຄຳດີ ວົງລ້ອມ ໄດ້ມີຄຳເຫັນກ່າວເປີດກອງປະຊຸມ ໂດຍທ່ານໄດ້ຮຽກຮ້ອງມາຍັງບັນດາຜູ້ເຂົ້າຮ່ວມ ຈົ່ງສຸມທຸກສະຕິປັນຍາຂອງທ່ານເຂົ້າໃນການຄົ້ນຄວ້າ, ເຊື່ອມຊຶມ ແລະສົນທະນາແລກປ່ຽນຄວາມຄິດເຫັນໃນແຕ່ລະຫົວຂໍ້ຮ່ວມກັນໃຫ້ເປັນຂະບວນຟົດຟື້ນ ເພື່ອຮັບປະກັນໃນການກຳແໜ້ນພາລະບົດບາດ, ສິດ ແລະ ໜ້າທີ່ ຂອງສະມາຊິກສະພາປະຊາຊົນແຂວງໃນແຕ່ລະດ້ານ ແລະ ຮັບປະກັນການຈັດຕັ້ງປະຕິບັດໜ້າທີ່ວຽກງານຂອງຕົນໃຫ້ສຳເລັດຕາມຈຸດປະສົງ ແລະ ຄາດໝາຍທີ່ວາງໄວ້;

ໃນກອງປະຊຸມ ໄດ້ຮັບຟັງພາລະບົດບາດ, ສິດ ແລະ ໜ້າທີ່ຂອງສະມາຊິກສະພາປະຊາຊົນແຂວງ ດ້ານການຕິດຕາມກວດກາ; ບົດຮຽນການປະເມີນບຸກຄະລາກອນທີ່ສະພາແຫ່ງຊາດເລືອກຕັ້ງ ແລະ ຮັບຮອງເອົາການເລືອກຕັ້ງ; ບົດຮຽນກ່ຽວກັບການຕິດຕາມກວດກາການຈັດຕັ້ງປະຕິບັດຄຳຊີ້ແຈງຂອງການຈັດຕັ້ງກ່ຽວຂ້ອງຂົງເຂດເສດຖະກິດ ແລະ ບົດຮຽນກ່ຽວກັບ ການກະກຽມບົດປະກອບຄຳເຫັນ ແລະ ການສ້າງຄຳຊັກຖາມ ໃນກອງປະຊຸມສະໄໝສາມັນຂອງສະພາປະຊາຊົນແຂວງ.

ກອງປະຊຸມເຝິກອົບຮົມສ້າງຄວາມເຂັ້ມແຂງໃຫ້ແກ່ສະມາຊິກສະພາປະຊາຊົນແຂວງໃນຄັ້ງນີ້ ດຳເນີນເປັນເວລາ 2 ວັນ.

**(ນັກຂ່າວ ສພຂ)**

## ກວດກາເນື້ອໃນຮອບດ້ານກ່ຽວກັບຮ່າງຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງການຈັດງານ ແລະ ບຸນປະເພນີພາຍໃນແຂວງຫຼວງນ້ຳທາ



(ສພຊ) ກອງປະຊຸມກວດກາເນື້ອໃນຮອບດ້ານກ່ຽວກັບຮ່າງຂໍ້ຕົກລົງວ່າດ້ວຍການຄຸ້ມຄອງການຈັດງານ ແລະ ບຸນປະເພນີພາຍໃນແຂວງຫຼວງນ້ຳທາ ໄດ້ຈັດຂຶ້ນໃນວັນທີ 14 ທັນວາ 2023 ໂດຍການເປັນປະທານຂອງທ່ານນາງເກສອນ ແສງຍະວົງ ຄະນະປະຈຳສະພາປະຊາຊົນແຂວງ, ປະທານຄະນະກຳມະການວັດທະນາທຳ-ສັງຄົມ ແລະ ບັນດາເຜົ່າ ສະພາປະຊາຊົນແຂວງ (ສພຊ), ມີສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ, ສະມາຊິກສະພາປະຊາຊົນແຂວງ, ບັນດາພະແນການ, ອົງການທີ່ກ່ຽວຂ້ອງພ້ອມດ້ວຍພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມ 21 ຄົນ, ຍິງ 5 ຄົນ.

ໃນກອງປະຊຸມ ທ່ານນາງ ເກສອນ ແສງຍະວົງ ໄດ້ມີຄຳເຫັນກ່າວເປີດກອງປະຊຸມວ່າ: ການຈັດກອງປະຊຸມຄັ້ງນີ້ກໍເພື່ອເປັນການທາບທາມ ແລະ ມີຄຳຄິດເຫັນຕໍ່ຮ່າງຂໍ້ຕົກລົງວ່າດ້ວຍການຄຸ້ມຄອງການຈັດງານ ແລະ ບຸນປະເພນີພາຍໃນແຂວງຫຼວງນ້ຳທາ ຄັ້ງສຸດທ້າຍ ກ່ອນນຳເຂົ້າພິຈາລະນາ, ຮັບຮອງໃນກອງປະຊຸມສະໄໝສາມັນ ເທື່ອທີ6ຂອງສະພາປະຊາຊົນແຂວງຊຸດທີ II, ການສ້າງຮ່າງຂໍ້ຕົກລົງສະບັບນີ້ ກໍເພື່ອເປັນການຫັນໄປສູ່ການປະຢັດ, ຕ້ານການຟູມເຟືອຍ ໃນທາມກາງເສດຖະກິດຝືດເຄືອງ ແລະ ເຮັດໃຫ້ສັງຄົມມີຄວາມເປັນລະບຽບຮຽບຮ້ອຍ, ຫຼຸດຜ່ອນປາກົດການຫຍໍ້ທໍ້ ເຊິ່ງການເຄື່ອນໄຫວຕ່າງໆຕ້ອງໃຫ້ສອດຄອງກັບລະບຽບກົດໝາຍ ແລະ ຮີດຄອງປະເພນີ, ຕິດພັນກັບການໃຊ້ຊີວິດແບບໃໝ່ໃນການຫັນເຂົ້າສູ່ສາກົນ, ພ້ອມນັ້ນ, ທ່ານຍັງຮຽກຮ້ອງໃຫ້ບັນດາຜູ້ແທນກອງປະຊຸມ ຈົ່ງຍົກສູງໃນການປະກອບຄຳຄິດເຫັນຕໍ່ຮ່າງຂໍ້ຕົກລົງດັ່ງກ່າວໃຫ້ມີເນື້ອໃນຖືກຕ້ອງຮັດກຸມສົມບູນຂຶ້ນກວ່າ.

ຈາກນັ້ນ, ກອງເລຂາກອງປະຊຸມ ກໍໄດ້ຂຶ້ນຜ່ານຮ່າງຕົກລົງວ່າດ້ວຍການຄຸ້ມຄອງການຈັດງານ ແລະ ບຸນປະເພນີພາຍໃນແຂວງຫຼວງນ້ຳທາ ເຊິ່ງມີທັງໝົດ 12 ໝວດ, 47 ມາດຕາແລະບັນດາຜູ້ເຂົ້າຮ່ວມກອງປະຊຸມ ກໍໄດ້ສຸມໃສ່ປະກອບຄຳຄິດເຫັນຕໍ່ຮ່າງຂໍ້ຕົກລົງດັ່ງກ່າວຢ່າງມີຈຸດສຸມ ເພື່ອເຮັດໃຫ້ຮ່າງຂໍ້ຕົກລົງສະບັບນີ້ໄດ້ຮັບການປັບປຸງ, ມີເນື້ອໃນຖືກຕ້ອງສົມບູນສອດຄອງກັບກົດໝາຍ, ສະພາບຄວາມເປັນຈິງ ສາມາດນຳໄປຈັດຕັ້ງປະຕິບັດໃນຕໍ່ໜ້າໄດ້ຮັບຜົນປະໂຫຍດສູງສຸດ.

**(ນາງ ວັນນີ ແຝງບົວວັນ)**



# ຫົວພັນ ສືບຕໍ່ເຝິກອົບຮົມສ້າງຄວາມເຂັ້ມແຂງ ໃຫ້ແກ່ສະມາຊິກສະພາປະຊາຊົນແຂວງ

(ສພຊ) ໃນລະຫວ່າງ ວັນທີ 12-13 ທັນວາ 2023 ສະພາປະຊາຊົນແຂວງຫົວພັນ ໄດ້ຈັດກອງປະຊຸມເຝິກອົບຮົມທັກສະເພື່ອສ້າງຄວາມເຂັ້ມແຂງ ໃຫ້ແກ່ສະມາຊິກສະພາປະຊາຊົນແຂວງ ຊຸດທີ II ທີ່ສະໂມສອນເມືອງຊຽງຄໍ້ ແຂວງຫົວພັນ ໂດຍການເປັນປະທານຂອງທ່ານ ຄອນປະພັນ ເລືອງສີຈັນທອງ ຮອງປະທານສະພາປະຊາຊົນແຂວງ, ເຂົ້າຮ່ວມມີສຳມະນາກອນທີ່ເປັນສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງ 10 ເມືອງທົ່ວແຂວງ ຕະຫລອດຮອດພະນັກງານວິຊາການພາຍໃນສະພາປະຊາຊົນແຂວງ ເຊິ່ງກອງປະຊຸມເຝິກອົບຮົມຄັ້ງນີ້ ໄດ້ຮັບການສະໜັບສະໜູນຈາກໂຄງການສ້າງຂີດຄວາມສາມາດ ແລະ ປະສິດທະພາບ ຂອງສະພາປະຊາຊົນໃນ ສປປ ລາວ ສະເຕັບ (STEPs).

ຈຸດປະສົງຂອງກອງປະຊຸມຄັ້ງນີ້ ກໍເພື່ອຍົກສູງຂີດຄວາມສາມາດ ແລະ ທັກສະ ສ້າງຄວາມເຂັ້ມແຂງ ແລະ ຍົກລະດັບໃຫ້ແກ່ສະມາຊິກສະພາປະຊາຊົນແຂວງ ໃນການຈັດຕັ້ງປະຕິບັດວຽກງານຕາມພາລະບົດບາດຂອງຕົນ, ທັງເປັນການແລກປ່ຽນປະສົບການ ແລະບົດຮຽນເຊິ່ງກັນແລະກັນ ໃນການປະຕິບັດໜ້າທີ່ວຽກງານຕົວຈິງ, ເພື່ອເຮັດໃຫ້ສະມາຊິກສະພາປະຊາຊົນແຂວງມີທັກສະ ແລະ ສາມາດເຄື່ອນໄຫວວຽກງານຢ່າງມີປະສິດພາບ ແລະ ປະສິດທິຜົນດີຂຶ້ນ.

ກອງປະຊຸມໄດ້ຮັບຟັງການບັນຍາຍເອກະສານໃນ 5 ຫົວຂໍ້ຄື: ທັກສະໃນການຕິດຕາມກວດກາ, ທັກສະການປະເມີນຜົນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານ; ການຊັກຖາມ, ການປະກອບຄຳເຫັນ, ການລົງພົບປະຜູ້ມີສິດເລືອກຕັ້ງ ແລະ ການແກ້ໄຂຄຳຮ້ອງ, ຄຳສະເໜີ ຂອງປະຊາຊົນ; ພ້ອມດຽວກັນນັ້ນ, ຜູ້ເຂົ້າຮ່ວມກອງປະຊຸມຍັງໄດ້ພ້ອມກັນສົນທະນາປະກອບຄຳຄິດຄຳເຫັນ, ແລກປ່ຽນບົດຮຽນເຊິ່ງກັນແລະກັນໃຫ້ມີຄວາມຮັບຮູ້, ເຂົ້າໃຈເລິກເຊິ່ງ ເພື່ອຄວາມເປັນເອກະພາບສູງ ກ້າວໄປເຖິງໃຫ້ສາມາດນຳໄປຈັດຕັ້ງປະຕິບັດໃນການໂຄສະນາເຜີຍແຜ່ ພົບປະຜູ້ມີສິດເລືອກຕັ້ງໃຫ້ມີຜົນສຳເລັດຕາມຈຸດປະສົງລະດັບຄາດໝາຍທີ່ວາງໄວ້.

ກອງປະຊຸມຍັງໄດ້ຮັບຟັງການມີຄຳເຫັນໂອ້ລົມຂອງທ່ານ ຄອນປະພັນ ເລືອງສີຈັນທອງ ເຊິ່ງທ່ານໄດ້ເນັ້ນໜັກໃຫ້ສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງ 10 ເມືອງ ພ້ອມດ້ວຍວິຊາການທີ່ກ່ຽວຂ້ອງ ຈົ່ງພ້ອມກັນນຳເອົາທັກສະ, ຄວາມຮູ້, ຄວາມສາມາດ, ຄວາມເຂົ້າໃຈ ແລະ ວິທີການດັ່ງກ່າວ ຕາມເນື້ອໃນຈິດໃຈຂອງກອງປະຊຸມເຝິກອົບຮົມຄັ້ງນີ້ ນຳໄປຈັດຕັ້ງປະຕິບັດໃຫ້ປາກົດຜົນເປັນຈິງ; ຍົກສູງຄວາມຮັບຜິດຊອບ, ຄວາມເປັນເຈົ້າການເພື່ອນຳເອົາບົດຮຽນການເຝິກອົບຮົມໃນຄັ້ງນີ້ ໄປຈັດຕັ້ງປະຕິບັດຕາມພາລະບົດບາດສິດ ແລະ ໜ້າທີ່ຂອງຕົນໃຫ້ຖືກຕ້ອງ, ສອດຄ່ອງຕາມລັດຖະທຳມະນູນ, ກົດໝາຍກຳນົດໄວ້ ໂດຍສະເພາະວຽກງານຕິດຕາມກວດກາ ຖືວ່າເປັນວຽກງານໜຶ່ງທີ່ສຳຄັນຢ່າງຍິ່ງໃນການຄຸ້ມຄອງເສດຖະກິດ-ສັງຄົມໃຫ້ມີຄວາມເປັນລະບຽບຮຽບຮ້ອຍ, ເອົາໃຈໃສ່ໃນການຄົ້ນຄວ້າເກັບກຳຂໍ້ມູນ, ວິເຄາະ, ວິໄຈບັນຫາໃຫ້ລະອຽດຈະແຈ້ງ, ຊັດເຈນເພື່ອເປັນຂໍ້ມູນພື້ນຖານ, ເປັນບ່ອນອີງໃຫ້ແກ່ການປະກອບຄຳເຫັນ ແລະ ການຊັກຖາມຢູ່ໃນກອງປະຊຸມສະພາແຕ່ລະຄັ້ງ, ເຮັດໃຫ້ການປະກອບຄຳເຫັນ, ຂໍ້ຊັກຖາມດັ່ງກ່າວຖືກຕ້ອງຕົງປະເດັນ ແລະ ຮັບປະກັນດ້ານຄຸນນະພາບໃນການຕັ້ງບັນຫາຂໍ້ຊັກຖາມຕ່າງໆທີ່ຈະໃຫ້ຂະແໜງການກ່ຽວຂ້ອງອະທິບາຍຊີ້ແຈ້ງບັນຫາທີ່ປະຊາຊົນ ແລະ ສັງຄົມໃຫ້ຄວາມສົນໃຈຫຼາຍ, ເພື່ອຈະນຳເອົາຄຳອະທິບາຍຂອງຂະແໜງການກ່ຽວຂ້ອງໄປເຜີຍແຜ່ອະທິບາຍຊີ້ແຈ້ງຕໍ່ປະຊາຊົນໄດ້ຮັບຮູ້, ເຂົ້າໃຈ ແລະ ມີຄວາມເປັນເອກະພາບ; ນອກຈາກນັ້ນ, ວຽກງານແກ້ໄຂຄຳຮ້ອງ, ຄຳສະເໜີ ຂອງປະຊາຊົນ ກໍເປັນວຽກງານໜຶ່ງທີ່ມີຄວາມສຳຄັນຫຼາຍ, ເປັນວຽກງານທີ່ຕິດພັນກັບທຸກຂົງເຂດວຽກງານ, ຕິດພັນກັບການດຳລົງຊີວິດປະຈຳວັນຂອງສັງຄົມ ສະນັ້ນ, ສະມາຊິກສະພາປະຊາຊົນແຂວງ ຕ້ອງໄດ້ເອົາໃຈໃສ່ ແລະ ໃຫ້ຄວາມສຳຄັນໃນເວລາລົງພົບປະຜູ້ມີສິດເລືອກຕັ້ງຢູ່ແຕ່ລະຂົງເຂດແມ່ນໃຫ້ຖືເອົາວຽກງານນີ້ຕິດພັນໄປນຳເນື້ອໃນບັນດາມະຕິກອງປະຊຸມສະພາປະຊາຊົນແຂວງ ເພື່ອລົງໂຄສະນາເຜີຍແຜ່ອະທິບາຍ, ຊີ້ແຈງໃຫ້ປະຊາຊົນໄດ້ຮັບຮູ້ເຂົ້າໃຈໃນນາມເປັນຕົວແທນໃຫ້ແກ່ປະຊາຊົນ.

ກອງປະຊຸມເຝິກອົບຮົມທັກສະເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ສະມາຊິກສະພາ ໄດ້ດຳເນີນມາເປັນເວລາ 2 ວັນເຕັມ ແລະ ອັດລົງດ້ວຍຜົນສຳເລັດອັນຈົບງາມ.

**(ເອີນ ແກ້ວບຸນມີ)**



# ກອງປະຊຸມຮ່ວມລະຫວ່າງ ສະພາປະຊາຊົນກັບອົງການປົກຄອງແຂວງ




(ສພຊ) ກອງປະຊຸມຮ່ວມລະຫວ່າງສະພາປະຊາຊົນແຂວງ ກັບອົງການປົກຄອງແຂວງ ເພື່ອຍົກສູງຄຸນນະພາບທາງດ້ານເນື້ອໃນໃຫ້ແກ່ກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາປະຊາຊົນແຂວງອັດຕະປື ຊຸດທີ II ໄດ້ຈັດຂຶ້ນໃນວັນທີ 12 ທັນວາ 2023 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ ໂດຍການເປັນປະທານຮ່ວມຂອງທ່ານ ນາງ ມີນາພອນ ໄຊສົມພູ ປະທານສະພາປະຊາຊົນແຂວງ ແລະ ທ່ານ ຄຳຫວັນ ຈັນທະໂຄດ ປະທານອົງການກວດກາພັກ-ລັດແຂວງ, ມີບັນດາທ່ານຄະນະປະຈຳສະພາປະຊາຊົນແຂວງ, ຄະນະປະຈຳພັກແຂວງ, ຄະນະກຳມະການ, ຄະນະເລຂາທິການ, ຫົວໜ້າພະແນກການ, ສະມາຊິກສະພາປະຊາຊົນແຂວງ ພ້ອມດ້ວຍພະນັກງານ-ວິຊາການທີ່ກ່ຽວຂ້ອງເຂົ້າຮ່ວມຢ່າງພ້ອມພຽງ.

ຈຸດປະສົງ ກໍເພື່ອປຶກສາຫາລື ແລະ ແລກປ່ຽນຄວາມຄິດຄວາມເຫັນ ເພື່ອກ້າວໄປເຖິງການສ້າງຄວາມເປັນເອກະພາບກັນ ຕໍ່ບັນດາເນື້ອໃນ ແລະ ຂອບເຂດຄວາມຮັບຜິດຊອບຂອງອົງການປົກຄອງແຂວງ ທີ່ຈະນຳເຂົ້າພິຈາລະນາ ໃນກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາປະຊາຊົນແຂວງ ຊຸດທີ II; ເປັນເອກະພາບທາງດ້ານທັດສະນະ ຕໍ່ບັນຫາສຳຄັນຈຳນວນໜຶ່ງ ແລະ ພ້ອມກັນຕີລາຄາ, ຖອດຖອນບົດຮຽນ ກ່ຽວກັບກົນໄກການປະສານງານລະຫວ່າງ ສະພາປະຊາຊົນແຂວງກັບອົງການປົກຄອງແຂວງແລະເພື່ອຮັບປະກັນໃຫ້ບັນດາເນື້ອໃນທີ່ຈະນຳສະເໜີຕໍ່ກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາປະຊາຊົນແຂວງ ຊຸດທີ II ໄດ້ຮັບການຄົ້ນຄ້ວາປະກອບຄວາມຄິດຄວາມເຫັນຈາກບັນດາສະມາຊິກສະພາປະຊາຊົນແຂວງ ແລະ ສ້າງຄວາມເປັນເອກະພາບຕໍ່ເນື້ອໃນຕ່າງໆໃຫ້ເລິກເຊິ່ງ, ເພື່ອຍົກສູງປະສິດທິພາບໃນການກະກຽມ ແລະ ດຳເນີນກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາປະຊາຊົນແຂວງ ແນໃສ່ເຮັດໃຫ້ການພິຈາລະນາ ແລະ ຮັບຮອງເນື້ອໃນກອງປະຊຸມມີຄຸນນະພາບ ຮັບປະກັນການປະຕິບັດພາລະບົດບາດຂອງສະພາປະຊາຊົນຂັ້ນແຂວງ, ເພື່ອເຮັດໃຫ້ພະແນກການ, ອົງການທຽບເທົ່າ ແລະ ສະມາຊິກສະພາປະຊາຊົນແຂວງ ໄດ້ແລກປ່ຽນຄຳຄິດຄຳເຫັນ ແລະ ເຂົ້າໃຈເປັນເອກະພາບຕໍ່ບັນດາເນື້ອໃນບົດລາຍງານ ແລະ ກົດໝາຍ ທີ່ມີລັກສະນະວິຊາການ, ຮັບປະກັນການປະຕິບັດພາລະບົດບາດຂອງແຕ່ລະພາກສ່ວນຖືກຕ້ອງ ແລະ ສອດຄ່ອງກັບກົດໝາຍກຳນົດ.

ໃນກອງປະຊຸມ ໄດ້ຮັບຟັງການຜ່ານບົດບັນທຶກການປະສານງານລະຫວ່າງສະພາປະຊາຊົນແຂວງ ຊຸດທີ II ກັບອົງການປົກຄອງແຂວງ, ແຜນການກະກຽມ ແລະ ດຳເນີນກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາປະຊາຊົນແຂວງ ຊຸດທີ II; ບົດລາຍງານຂອງພະແນກແຜນການ ແລະ ການລົງທຶນ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ປະຈຳປີ 2023 ແລະ ທິດທາງແຜນການ ປະຈຳປີ 2024; ບົດລາຍງານຂອງພະແນກການເງິນ ກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈຳປີ 2023 ແລະ ທິດທາງແຜນການ ປະຈຳປີ 2024; ບົດລາຍງານຂອງອົງການກວດກາລັດແຂວງ ກ່ຽວກັບຜົນການກວດກາການນຳໃຊ້ງົບປະມານບ້ວງໄພພິບັດຂອງເມືອງສະໜາມໄຊ ແລະ ບົດລາຍງານຂອງພະແນກພະລັງງານ ແລະ ບໍ່ແຮ່ ກ່ຽວກັບການຈັດຕັ້ງປະຕິບັດງົບປະມານບ້ວງພັນທະທຶນພັດທະນາທ້ອງຖິ່ນຂອງໂຄງການລົງທຶນດ້ານບໍ່ແຮ່ ແລະ ພະລັງງານໄຟຟ້າ.

ໂອກາດນີ້, ທ່ານ ນາງ ມີນາພອນ ໄຊສົມພູ ໄດ້ມີຄຳເຫັນໃນກອງປະຊຸມວ່າ: ເພື່ອຮັບປະກັນທາງດ້ານເນື້ອໃນໃຫ້ມີຄຸນນະພາບ, ປະສິດທິພາບບັນລຸຕາມແຜນການທີ່ວາງໄວ້, ສະເໜີໃຫ້ສະມາຊິກສະພາປະຊາຊົນແຂວງ, ຄະນະຮັບຜິດຊອບເນື້ອໃນ, ບັນດາທ່ານທີ່ເຂົ້າຮ່ວມກອງປະຊຸມຄັ້ງນີ້ ຈົ່ງໄດ້ມີຄວາມຄິດຄວາມເຫັນ, ຮ່ວມກັນຄົ້ນຄວ້າຊອກຫາວິທີການແກ້ໄຂບັນຫາຄວາມຫຍຸ້ງຍາກທີ່ເກີດຂຶ້ນ ໃຫ້ມີຄວາມເປັນເອກະພາບ ແລະຮັບປະກັນສອດຄ່ອງກັບແນວທາງນະໂຍບາຍຂອງພັກ, ສອດຄ່ອງກັບສິດ ແລະ ໜ້າທີ່ຂອງສະມາຊິກສະພາປະຊາຊົນແຂວງ ຕາມທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ, ກົດໝາຍ ແລະ ຈົ່ງສືບຕໍ່ໃຫ້ການຮ່ວມມື ແລະ ສະໜອງຂໍ້ມູນດ້ານເນື້ອໃນ ທີ່ຈະນຳເຂົ້າພິຈາລະນາໃຫ້ໄດ້ຮັບປະສິດທິຜົນຕາມລະດັບຄາດໝາຍ ແລະ ທ່ວງທັນຕາມກຳນົດເວລາ.

**(ວິນັດ)**




# ກົດໝາຍ ວ່າດ້ວຍພິພິທະພັນ

ຕໍ່ຈາກສະບັບກ່ອນ

**ມາດຕາ 51 ຂໍ້ຫ້າມສຳລັບຜູ້ໃຊ້ບໍລິການພິພິທະພັນ**

ຫ້າມຜູ້ໃຊ້ບໍລິການພິພິທະພັນ ມີພຶດຕິກຳດັ່ງນີ້:

1. ນຳເອົາວັດຖຸ ແລະ ອຸປະກອນອື່ນ ເຂົ້າ ຫຼື ອອກ ພິພິທະພັນໂດຍບໍ່ໄດ້ຮັບອະນຸຍາດ;
2. ທຳລາຍ, ສ້າງຄວາມເສຍຫາຍໃຫ້ແກ່ວັດຖຸພັນ ຫຼື ຊັບສິນຂອງພິພິທະພັນ;
3. ສວຍໃຊ້ພິພິທະພັນ, ວັດຖຸພັນ ຫຼື ຊັບສິນຂອງພິພິທະພັນໂດຍບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;
4. ໃສ່ຮ້າຍ, ບິດເບືອນຄວາມເປັນຈິງໃນການປະຕິບັດໜ້າທີ່ວຽກງານຂອງບຸກຄະລາກອນພິພິທະພັນ;
5. ສວຍໂອກາດ, ລັກລອບເອົາຊັບສິນຂອງພິພິທະພັນ;
6. ມີພຶດຕິກຳອື່ນທີ່ເປັນການລະເມີດກົດໝາຍ.

## ພາກທີ VII
## ການຄຸ້ມຄອງ ແລະ ການກວດກາ ວຽກງານພິພິທະພັນ
### ໝວດທີ 1
### ການຄຸ້ມຄອງວຽກງານພິພິທະພັນ

**ມາດຕາ 52 ອົງການຄຸ້ມຄອງວຽກງານພິພິທະພັນ**

ລັດຖະບານ ເປັນຜູ້ຄຸ້ມຄອງວຽກງານພິພິທະພັນ ຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດໂດຍມອບໃຫ້ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງວຽກງານພິພິທະພັນ ປະກອບດ້ວຍ:

1. ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ;
2. ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ, ນະຄອນຫຼວງ;
3. ຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວເມືອງ, ເທດສະບານ, ນະຄອນ.

**ມາດຕາ 53 ສິດ ແລະ ໜ້າທີ່ ຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ**

ໃນການຄຸ້ມຄອງວຽກງານພິພິທະພັນ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ສ້າງ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການກ່ຽວກັບວຽກງານພິພິທະພັນ ເພື່ອສະເໜີລັດຖະບານ ພິຈາລະນາ;
2. ຜັນຂະຫຍາຍ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການກ່ຽວກັບວຽກງານພິພິທະພັນເປັນແຜນການ, ແຜນງານ, ໂຄງການຂອງຕົນ ແລະ ຈັດຕັ້ງປະຕິບັດ;
3. ໂຄສະນາ ເຜີຍແຜ່, ສຶກສາອົບຮົມນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການກ່ຽວກັບວຽກງານພິພິທະພັນ;
4. ຄົ້ນຄວ້າ, ສ້າງແຜນງົບປະມານ ເພື່ອນຳໃຊ້ເຂົ້າໃນວຽກງານພິພິທະພັນ;
5. ຊີ້ນຳທາງດ້ານວິຊາການ ກ່ຽວກັບວຽກງານພິພິທະພັນ;
6. ຊີ້ນຳ, ຊຸກຍູ້, ຕິດຕາມ ກວດກາ ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ພິພິທະພັນແຕ່ລະປະເພດ ແລະ ສະມາຄົມພິພິທະພັນ ໃນການຈັດຕັ້ງປະຕິບັດກົດໝາຍ, ແຜນການ, ແຜນງານ ແລະ ໂຄງການກ່ຽວກັບວຽກງານພິພິທະພັນ;
7. ອະນຸຍາດ ສ້າງຕັ້ງ, ປ່ຽນແປງ ຫຼືຍົກເລີກພິພິທະພັນລວມໝູ່ ແລະ ເອກະຊົນ;
8. ສ້າງ, ບຳລຸງ, ຝຶກອົບຮົມ ແລະ ນຳໃຊ້ບຸກຄະລາກອນພິພິທະພັນທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ;
9. ພິຈາລະນາ ແລະ ແກ້ໄຂຄຳສະເໜີຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບວຽກງານພິພິທະພັນ;
10. ປະສານສົມທົບກັບກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງໃນການຈັດຕັ້ງປະຕິບັດວຽກງານພິພິທະພັນ;
11. ພົວພັນ ແລະ ຮ່ວມມື ກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານພິພິທະພັນ;
12. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານພິພິທະພັນຕໍ່ລັດຖະບານຢ່າງເປັນປົກກະຕິ;
13. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 54 ສິດ ແລະ ໜ້າທີ່ ຂອງພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຂວງ, ນະຄອນຫຼວງ**

ໃນການຄຸ້ມຄອງວຽກງານພິພິທະພັນ ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຂວງ, ນະຄອນຫຼວງ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງ ແລະ ຜັນຂະຫຍາຍນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານພິພິທະພັນ;
2. ໂຄສະນາເຜີຍແຜ່, ສຶກສາອົບຮົມນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານພິພິທະພັນ;
3. ຄົ້ນຄວ້າ, ສ້າງແຜນງົບປະມານ ເພື່ອນຳໃຊ້ເຂົ້າໃນວຽກງານພິພິທະພັນ;
4. ຊີ້ນຳທາງດ້ານວິຊາການ ກ່ຽວກັບວຽກງານພິພິທະພັນ;
5. ອະນຸຍາດສ້າງຕັ້ງ, ປ່ຽນແປງ ຫຼືຍົກເລີກພິພິທະພັນລວມໝູ່ ແລະ ເອກະຊົນ ຕາມການແບ່ງຂັ້ນຄຸ້ມຄອງ;
6. ຊີ້ນຳ, ຊຸກຍູ້ ຕິດຕາມ ກວດກາ ຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວເມືອງ, ເທດສະບານ, ນະຄອນ ແລະ ພິພິທະພັນແຕ່ລະປະເພດ ໃນການຈັດຕັ້ງປະຕິບັດວຽກງານພິພິທະພັນ;
7. ສະເໜີສ້າງ, ບຳລຸງ ແລະ ຝຶກອົບຮົບບຸກຄະລາກອນພິພິທະພັນທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ;
8. ພິຈາລະນາ ແລະ ແກ້ໄຂຄຳສະເໜີຂອງບຸກຄົນ, ນິຕິບຸກຄົນ ຫຼືການຈັດຕັ້ງ ກ່ຽວກັບວຽກງານພິພິທະພັນ;
9. ປະສານສົມທົບກັບພະແນກ, ອົງການລັດທຽບເທົ່າພະແນກຂັ້ນແຂວງ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານພິພິທະພັນ;
10. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ ກ່ຽວກັບວຽກງານພິພິທະພັນຕາມການມອບໝາຍ;
11. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານພິພິທະພັນ ຕໍ່ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແລະ ອົງການປົກຄອງຂັ້ນແຂວງ ຢ່າງເປັນປົກກະຕິ;
12. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 55 ສິດ ແລະ ໜ້າທີ່ ຂອງຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເມືອງ, ເທດສະບານ, ນະຄອນ**

ໃນການຄຸ້ມຄອງວຽກງານພິພິທະພັນ ຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເມືອງ, ເທດສະບານ, ນະຄອນ ມີສິດ ແລະ ໜ້າທີ່ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານພິພິທະພັນ;
2. ເຜີຍແຜ່, ສຶກສາ ອົບຮົມ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານພິພິທະພັນ;
3. ຄົ້ນຄວ້າ, ສ້າງແຜນງົບປະມານ ເພື່ອນຳໃຊ້ເຂົ້າໃນວຽກງານພິພິທະພັນ;
4. ສຳຫຼວດ, ເກັບກຳ ຂໍ້ມູນ, ວິໄຈ ວັດຖຸພັນ;
5. ປະກອບຄຳເຫັນຕໍ່ການຂໍອະນຸຍາດສ້າງຕັ້ງພິພິທະພັນລວມໝູ່ ແລະ ເອກະຊົນ;
6. ປະສານສົມທົບກັບຫ້ອງການ, ອົງການລັດທຽບເທົ່າຫ້ອງການຂັ້ນເມືອງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານພິພິທະພັນ;
7. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານພິພິທະພັນ ຕໍ່ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວຂັ້ນແຂວງ ແລະ ອົງການປົກຄອງຂັ້ນເມືອງ ຢ່າງເປັນປົກກະຕິ;
8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 56 ສິດ ແລະ ໜ້າທີ່ຂອງຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ**

ຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ມີສິດ ແລະ ໜ້າທີ່ໃຫ້ການຮ່ວມມື ແລະ ປະສານສົມທົບກັບຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນໃນການຈັດຕັ້ງປະຕິບັດ ແລະ ຄຸ້ມຄອງວຽກງານພິພິທະພັນ.

### ໝວດທີ 2
### ການກວດກາວຽກງານພິພິທະພັນ

**ມາດຕາ 57 ອົງການກວດກາວຽກງານພິພິທະພັນ**

ອົງການກວດກາວຽກງານພິພິທະພັນ ປະກອບດ້ວຍ:

1. ອົງການກວດກາພາຍໃນ ຊຶ່ງແມ່ນ ອົງການດຽວກັນກັບອົງການຄຸ້ມຄອງວຽກງານພິພິທະພັນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 52 ຂອງກົດໝາຍສະບັບນີ້;
2. ອົງການກວດກາພາຍນອກ ຊຶ່ງແມ່ນສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດກາລັດແຕ່ລະຂັ້ນ, ອົງການກວດສອບແຫ່ງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ສື່ມວນຊົນ ແລະ ປະຊາຊົນ.

**ມາດຕາ 58 ເນື້ອໃນການກວດກາ**

ການກວດກາວຽກງານພິພິທະພັນ ມີເນື້ອໃນ ດັ່ງນີ້:

1. ການຈັດຕັ້ງປະຕິບັດ ນະໂຍບາຍ, ກົດໝາຍ ແລະ ລະບຽບການກ່ຽວກັບວຽກງານພິພິທະພັນ;
2. ການສ້າງ ແລະ ການປະຕິບັດແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານພິພິທະພັນໃນແຕ່ລະໄລຍະ;
3. ລັກສະນະ, ເນື້ອໃນຂໍ້ມູນວັດຖຸພັນທີ່ນຳໄປໂຄສະນາເຜີຍແຜ່;
4. ການສ້າງ, ບຳລຸງ, ນຳໃຊ້ ແລະ ປະຕິບັດນະໂຍບາຍຕໍ່ບຸກຄະລາກອນພິພິທະພັນ;
5. ການປະກອບ ແລະ ການນຳໃຊ້ອຸປະກອນ, ພາຫະນະ ແລະ ງົບປະມານ ໃນການຈັດຕັ້ງປະຕິບັດ ວຽກງານພິພິທະພັນ;
6. ການພິຈາລະນາ ແລະ ການແກ້ໄຂຄຳສະເໜີຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບວຽກງານພິພິທະພັນ;
7. ເນື້ອໃນອື່ນທີ່ເຫັນວ່າຈຳເປັນ.

**ມາດຕາ 59 ຮູບການການກວດກາ**

ການກວດກາວຽກງານພິພິທະພັນ ມີ ສາມຮູບການ ດັ່ງນີ້:

1. ການກວດກາຕາມລະບົບປົກກະຕິ ຊຶ່ງແມ່ນການກວດກາທີ່ດຳເນີນໄປຕາມແຜນການ ຢ່າງເປັນປະຈຳ ແລະ ມີກຳນົດເວລາທີ່ແນ່ນອນ;
2. ການກວດກາ ໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນການກວດການອກແຜນ ເມື່ອເຫັນວ່າມີຄວາມຈຳເປັນ ຕ້ອງແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ;
3. ການກວດກາແບບກະທັນຫັນ ຊຶ່ງແມ່ນການກວດກາທີ່ຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ;

ໃນການດຳເນີນການກວດກາວຽກງານພິພິທະພັນນັ້ນ ໃຫ້ປະຕິບັດຕາມກົດໝາຍຢ່າງເຂັ້ມງວດ.

## ພາກທີ VIII
## ງົບປະມານ, ເຄື່ອງໝາຍ ແລະ ຕາປະທັບ ພິພິທະພັນ

**ມາດຕາ 60 ງົບປະມານ ພິພິທະພັນ**

ງົບປະມານທີ່ນຳໃຊ້ເຂົ້າໃນວຽກງານຂອງພິພິທະພັນລັດໄດ້ມາຈາກ:

1. ງົບປະມານຂອງລັດ;
2. ລາຍຮັບທາງດ້ານວິຊາການ;
3. ການປະກອບສ່ວນຂອງບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ, ສັງຄົມ ຫຼື ການຊ່ວຍເຫຼືອຂອງ ພາກພື້ນ ແລະ ສາກົນ;
4. ລາຍຮັບອື່ນ ທີ່ຖືກຕ້ອງຕາມກົດໝາຍ.

**ມາດຕາ 61 ເຄື່ອງໝາຍ ພິພິທະພັນ**

ພິພິທະພັນແຕ່ລະປະເພດ ມີເຄື່ອງໝາຍສະເພາະ ໂດຍແມ່ນຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນຜູ້ອະນຸມັດ ພາຍຫຼັງປະສານສົມທົບກັບຂະແໜງການອື່ນທີ່ກ່ຽວຂ້ອງ.

**ມາດຕາ 62 ຕາປະທັບ ພິພິທະພັນ**

ພິພິທະພັນແຕ່ລະປະເພດ ມີຕາປະທັບເປັນຂອງຕົນເອງເພື່ອນຳໃຊ້ໃນການເຄື່ອນໄຫວວຽກງານທາງລັດຖະການ.

## ພາກທີ IX
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 63 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານໃນການຈັດຕັ້ງປະຕິບັດກົດໝາຍສະບັບນີ້ ເປັນຕົ້ນ ການຄຸ້ມຄອງ, ອະນຸລັກ, ປົກປັກຮັກສາ, ບູລະນະ ແລະ ພັດທະນາພິພິທະພັນ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 64 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດກົດໝາຍສະບັບນີ້ ເປັນຕົ້ນ ຂໍ້ຫ້າມ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 50 ແລະ 51 ຂອງກົດໝາຍສະບັບນີ້ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ຖືກລົງໂທດທາງອາຍາ ຕາມກົດໝາຍ.

## ພາກທີ X
## ບົດບັນຍັດສຸດທ້າຍ

**ມາດຕາ 65 ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍ ສະບັບນີ້.

**ມາດຕາ 66 ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດນັບແຕ່ວັນທີ 30 ມີນາ 2023 ພາຍຫຼັງ ປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການ ເປັນຕົ້ນໄປ.




# ເປີດປະຕູຮັບແຂກ

# ດົ້ນກົບເມກ



ຂຶ້ນຊື່ວ່າການໄປຫາມາສູ່ ຢ້ຽມຢາມຖາມຂ່າວ ຫຼື ວ່າທ່ອງທ່ຽວໄປມາ ຂຶ້ນເໜືອລົງໃຕ້ ຍ່ອມໄດ້ພົບພໍ້ສິ່ງທີ່ປາດຖະໜາ ແລະ ບໍ່ປາດຖະໜາ ເຊິ່ງສິ່ງສຳຄັນແມ່ນເຈົ້າຂອງບ້ານເຮືອນຕ້ອງໄດ້ທົບທວນວິທີຄິດ-ວິທີຕ້ອນຮັບ ດ້ວຍການສຳຫຼວດກວດກາລູກບ້ານຫຼານເມືອງໃຫ້ເຂົາເຈົ້າຕື່ນໂຕປັບປ່ຽນສ້າງສິ່ງແວດລ້ອມອ້ອມໂຕໃຫ້ສະອາດຈົບງາມ ໝາຍຄວາມວ່າຄົນກັບຄົນຄົບກັນ ກໍຕ້ອງຢາກເຫັນສິ່ງສະອາດງາມຕາ.

ການຕ້ອນຮັບແຂກມີຫຼາຍແບບ ທັງເຈົ້າພາບກຽມຕ້ອນຮັບໃຫ້ມີລະບຽບວິໄນ ເນັ້ນຄວາມສະອາດ-ການຈັບຈ່າຍຊື້ຂາຍກໍຕ້ອງຮັບປະກັນລາຄາ ຍຸຕິທຳ ບໍ່ສວຍໂອກາດ ແລະ ທີ່ພັກນອນ, ສະຖານທີ່ທ່ອງທ່ຽວ, ກິນດື່ມ ກໍຕ້ອງໄດ້ສ່ອງແສງ ກວດກາໃຫ້ເຂົ້າໃຈກັນທົ່ວເຖິງ, ການທ່ອງທ່ຽວ-ຄົບຄ້າສະມາຄົມລະຫວ່າງຄົນກັບຄົນ ບໍ່ແມ່ນໃຫ້ແຕ່ເຈົ້າບ້ານ (ເຈົ້າພາບ) ເທົ່ານັ້ນກະກຽມຕ້ອນຮັບ ແຕ່ແຂກຜູ້ມາທ່ຽວ-ມາພັກທັງຊົ່ວຄາວ ແລະ ຍາວນານ ກໍຕ້ອງໄດ້ຮັບການແຈ້ງເຕືອນເຖິງຮີດຄອງປະເພນີຂອງເຈົ້າພາບ ໝາຍຄວາມວ່າບໍ່ເອົານິໄສເດີມໄປນຳໃຊ້ກັບຄົນບ້ານອື່ນ ເຊິ່ງເຈົ້າໜ້າທີ່ການຈັດຕັ້ງເຫັນວ່າຕ້ອງໄດ້ເຂັ້ມແຂງແຈ້ງເຕືອນວ່າ ລະບຽບ-ຮີດຄອງປະເພນີເຮົາປະຕິບັດກັນແນວໃດ? ການເປີດບ້ານຮັບແຂກຈຶ່ງເລັ່ງທວງໃຫ້ສະມາຊິກພາຍໃນຄອບຄົວທຸກຄົນບໍ່ເຮັດນິໄສຕາມໃຈ ເຫັນແຕ່ແກ່ໄດ້ ແຕ່ບໍ່ໄດ້ຄຳນຶງເຖິງພາບພົດ-ກຽດສັກສີໜ້າຕາຄວາມເປັນເຈົ້າຂອງບ້ານ, ເວລາສະມາຊິກເຈົ້າຂອງບ້ານ-ເຈົ້າຂອງປະເທດເຮັດອັນໃດຜິດພາດ ບໍ່ສະອາດງາມຕາ ພາໃຫ້ເສຍໜ້າຄົນທັງປະເທດ ເຂົ້າທຳນອງປາໂຕດຽວເນົ່າໝົດຂ້ອງ.

ການຮັກສາລາຍໄດ້ດ້ານທ່ອງທ່ຽວ ກໍຕ້ອງໄດ້ຮັກສາຄວາມສະອາດຈົບງາມ-ກິລິຍາມາລະຍາດ ການຕ້ອນຮັບໃຫ້ແຂກປະທັບໃຈ ແລະ ສຳຄັນຕາມມາ ກໍແມ່ນການໃຊ້ຈ່າຍ-ລາຄາສິນຄ້າໃຫ້ຍຸຕິທຳ ບໍ່ສວຍໂອກາດໂກງແຂກ, ຖ້າເຂົາບໍ່ປະທັບໃຈ ເຂົາກໍຫາຍໜ້າ ເຮົາຕ້ອງຄິດໃຫ້ຍາວໄກ.






# ໃຝ່ຝັນ – ເພີ້ຝັນ

'ໃຝ່ຝັນ' ແລະ 'ເພີ້ຝັນ' ເປັນຄຳກິລິຍາແບບປະສົມ ຖ້າແຍກອອກກໍຈະໄດ້ສາມຄຳສັບໂດດ ຄື ໃຝ່ - ເພີ້ - ຝັນ.

'ໃຝ່' ໝາຍເຖິງ 'ມຸ່ງ, ຫວັງ, ປາຖະໜາ, ເອື້ອມຫາ' ເຊັ່ນ:

- ລາວເປັນຄົນໃຝ່ສູງ ເມື່ອບໍ່ສົມປາຖະໜາ ລາວຈຶ່ງກາຍເປັນຄົນເສຍສະຕິ.

'ເພີ້' ໝາຍເຖິງ 'ຈີ່ມ, ໄບ່, ໄບ່ດ້ວຍຄວາມຫຼົງສະຕິ' ເຊັ່ນ:

- ບໍ່ວ່ານັ່ງວ່ານອນ ຍາມໃດລາວກໍເພີ້ຫາຄົນຮັກທີ່ຈາກໄປໄກແສນໄກ.

'ຝັນ' ໝາຍເຖິງ 'ອາການທີ່ເກີດຂຶ້ນເໝືອນກັບທີ່ຮູ້ເຫັນດ້ວຍນິມິດໃນເວລານອນຫຼັບ, ອາລົມຮູ້ໃນເວລານອນຫຼັບ' ເຊັ່ນ

- ມື້ຄືນນີ້ ນອນຝັນວ່າໄປທ່ຽວຫຼວງພະບາງ ແລະໄປພໍ້ຜູ້ສາວງາມໆຢູ່ຕາດກວາງຊີ.

ເມື່ອເອົາ ໃຝ່ + ຝັນ = ໃຝ່ຝັນ ໝາຍເຖິງ ຄິດຫວັງ, ເຝົ້ານຶກເຖິງ, ຄິດຫວັງຢູ່ຢ່າງນັ້ນ ໂດຍບໍ່ຮູ້ວ່າເມື່ອໃດຈະເກີດເປັນຈິງໄດ້ ເຊັ່ນ:

- ລາວໃຝ່ຝັນຢາກເປັນມະຫາເສດຖີ.
- ຄຳດີໃຝ່ຝັນຢາກເປັນນັກຮ້ອງຜູ້ມີຊື່ສຽງ.
- ຄວາມໃຝ່ຝັນຂອງລາວໄດ້ກາຍເປັນຈິງ ເມື່ອລາວສອບເສັງໄປຮຽນຕ່າງປະເທດໄດ້.

ເມື່ອເອົາ ເພີ້ + ຝັນ ກໍກາຍເປັນ ເພີ້ຝັນ ເຊິ່ງໝາຍເຖິງ "ຄິດຝັນເຖິງສິ່ງທີ່ເປັນໄປບໍ່ໄດ້" ເຊັ່ນ:

- ຍ້ອນເພີ້ຝັນຢາກເປັນລູກເຂີຍມະຫາເສດຖີ ລາວເລີຍຜິດຫວັງ.
- ຢ່າເພີ້ຝັນຢາກໄດ້ເດືອນໄດ້ດາວເດີ ມັນເປັນໄປບໍ່ໄດ້ດອກ.
- ນອນເພີ້ຝັນຫາຄົນຮັກ ທີ່ຫາກໍແຕ່ງດອງກັບຊາຍອື່ນເມື່ອສອງວັນຜ່ານມາ.

ສະຫຼຸບແລ້ວ ໃຝ່ຝັນ ແລະ ເພີ້ຝັນ ມີຄວາມໝາຍໃກ້ຄຽງກັນ ຕ່າງແຕ່ວ່າ ໃຝ່ຝັນ ສາມາດເປັນຈິງໄດ້ໃນອະນາຄົດ ແຕ່ ເພີ້ຝັນ ເປັນພຽງຄວາມຝັນທີ່ບໍ່ສາມາດກາຍເປັນຈິງໄດ້.

ແລ້ວທ່ານຜູ້ອ່ານເດ, ເຄີຍໃຊ້ ສອງຄຳນີ້ມາກ່ອນບໍ



# ວິທີເຮັດວຽກ




### ພາກທີ 4
### ມາລະຍາດ ແລະ ຄຸນສົມບັດຂອງນັກປະຕິວັດ (ຕໍ່)

3. ທິດສະດີ, ພາກປະຕິບັດຕ້ອງເດີນຄຽງຄູ່ກັນເລື້ອຍໆ, ຜູ້ໃດຂາດສະຕິຕໍ່ພັກ ມັກຈະມີພະຍາດດັ່ງລຸ່ມນີ້:

ພະຍາດເປັນແຕ່ປາກ, ພະຍາດທ້ອງຖິ່ນ, ພະຍາດຕັນຫາຖານະຕຳແໜ່ງ, ພະຍາດຂາດລະບຽບວິໄນ, ພະຍາດມັກງ່າຍ,ພະຍາດຫ່າງໄກປະຊາຊົນ, ພະຍາດໃນເຮົາ, ພະຍາດຮູບນອກ, ພະຍາດຂີ້, ພະຍາດຫຼົ້ນກິນໂລເລ, ພະຍາດປົນເປ ບໍ່ມີຖ້ານມີຖັນ, ພະຍາດຂີ້ຄ້ານ.

ຜູ້ໃດຕິດພະຍາດອັນໃດອັນໜຶ່ງໃນ 12 ຂໍ້ທີ່ກ່າວມານີ້ແມ່ນມີແຕ່ເຮັດໃຫ້ເສຍວຽກການ, ເພາະສະນັ້ນ ພວກເຮົາຕ້ອງຂະຫຍັນຂັນແຂງໃຊ້ການຕຳໜິຕົນເອງ ແລະ ຕຳໜິກັນເພື່ອຊ່ວຍເຫຼືອກັນແກ້ໄຂດັດແປງພະຍາດເຫຼົ່ານັ້ນໃຫ້ຈົນໝົດ ເຮັດແນວນັ້ນ ພັກຈຶ່ງຈະຂະຫຍາຍກວ້າງຢ່າງໄວເວລາໄດ້.

ຕາໜິແປວ່າ: ຍົກເອົາທັງຂໍ້ດີເຮົາຂຶ້ນມາເວົ້າ ແລະ ຂໍ້ບົກພ່ອງຂອງເພື່ອນສະຫາຍຂອງເຮົາຂຶ້ນມາເວົ້າ.

ອ່ານຕໍ່ສະບັບໜ້າ...

# ຂຽນຄຳລາວໃຫ້ຖືກ

# ຄູແສງ

| ຖືກ | ຜິດ |
|---|---|
| ອັກເສບ | ອັບເສບ |
| ພ່າຍແພ້ | ຜ່າຍແພ້ |
| ທີ່ຢູ່ອາໄສ | ທີ່ຢູ່ອາໃສ |
| ແມງເມົ່າ | ແມງເໝົ່າ |
| ອຸບປະໂພກ | ອຸບບະໂພກ |
| ລັດຖະສາດ | ລັດທະສາດ |
| ເຄື່ອງອາໄຫຼ່ | ເຄື່ອງອາໄລ່ |
| ສະໜິດສະໜົມ | ສະນິດສະນົມ |
| ຫົວສໍ່າໝາກກອກ | ຫົວຊໍ່າໝາກກອກ |



ສຸກສະບາຍທາຍໂລດ

# ຫຼາກຫຼາຍຄຸນປະໂຫຍດ ຂອງຜັກຄາວທອງ

**ໂດຍ: ທິວາກະທິ**



ຜັກຄາວທອງ ຫຼື ໃບຜັກຄາວ ເປັນພືດສະໝຸນໄພຕະກູນດຽວກັບໃບພູ ສາມາດປູກກັນໃນທົ່ວໄປ ໂດຍສະເພາະໃນແຖວອາຊີ ເຊິ່ງເປັນພືດຕະກູນລົ້ມລຸກ ແລະ ມັກອາກາດຊຸ່ມ ມີຣົດຊາດຝາດເລັກນ້ອຍ ແລະ ມີກິ່ນຄາວປາ ນິຍົມເອົາມາກິນກັບລາບ, ກ້ອຍ, ປີ້ງ ແລະ ອື່ນໆ.

ຜົນການວິໄຈທາງການແພດ ໄດ້ນຳຜັກຄາວທອງມາສະກັດເປັນຢານ້ຳ ແລ້ວນຳມາທົດລອງກັບຜູ້ປ່ວຍໂຣກມະເຮັງ ໂດຍໃຊ້ດື່ມບຳລຸງຮ່າງກາຍຄວບຄູ່ກັບການປິ່ນປົວໂດຍການສາຍລັງສີ ປາກົດວ່າສາມາດເຮັດໃຫ້ຜູ້ປ່ວຍມະເຮັງຫາຍດີຈາກພະຍາດຮ້າຍຊະນິດນີ້ໄດ້ວ່ອງໄວກວ່າການປິ່ນປົວແບບເກົ່າ ແລະ ການວິໄຈດັ່ງກ່າວຍັງໃຫ້ຮູ້ອີກວ່າສີແດງທາງລຸ່ມຂອງໃບຄາວທອງເປັນສານເຣນຕິແບກທີເຣຍ ມີຈຸລິນຊີ ແລະ ແລກໂຕແບຊີລັດ ສາຍພັນໜຶ່ງ ເຊິ່ງຈະໄປກະຕຸ້ນພູມຄຸ້ມກັນໃນຮ່າງກາຍຂອງມະນຸດໃຫ້ເຮັດວຽກດີຂຶ້ນ ໄປຢຸດການຈະເລີນເຕີບໂຕ ແລະ ຕ້ານທານເນື້ອງອກ ພ້ອມຂັບສານພິດທີ່ກໍ່ໃຫ້ເກີດມະເຮັງອອກຈາກຮ່າງກາຍ

ນອກຈາກນີ້, ຍັງສາມາດບັນເທົາອາການພະຍາດເບົາຫວານ, ຄວາມດັນເລືອດສູງ-ຕ່ຳ, ເສັ້ນເລືອດຕີບຕັນ, ກະເພາະລຳໄສ້ອັກເສບ ຫຼືບໍ່ປົກກະຕິ, ຊ່ວຍໃນລະບົບຂັບຖ່າຍ, ພະຍາດປະດົງ, ເຈັບຫົວໄມເກຣນ, ລິດສີດວງທະວານ, ປະຈຳເດືອນມາບໍ່ປົກກະຕິ, ອາການໄອທອງທັງຍິງ ແລະ ຊາຍ, ພະຍາດພູມແພ້ ແລະ ພູມຄຸ້ມກັນບົກພ່ອງ ແລະ ອື່ນໆ.



## ລົມສາຍ ລະບາຍ

*(ເລື່ອງເບົາໆ ເອົ້າແບບກັນເອງ ບໍ່ເຄັ່ງພິທີການ)*

**# ສາວຈົ້ມ**

❋ **ບັນ** ຍາກາດ ສະເຫຼີມສະຫຼອງປີໃໝ່ສາກົນ ຜ່ານພົ້ນໄປ ຈາກນີ້, ຕັ້ງສະຕິ ແລ້ວເລີ່ມຕົ້ນເຮັດແຕ່ສິ່ງດີໆ ເພື່ອໃຫ້ **2024** ເປັນປີແຫ່ງຄວາມສຸກ ເຮັດໃຫ້ດີທີ່ສຸດໃນມື້ນີ້ ແລ້ວມື້ອື່ນ ມື້ຮື ແລະ ມື້ຕໍ່ໆໄປໃນ **365 ວັນ**ນັບຈາກຈະດີໄປພ້ອມໆກັບ **ປີໃໝ່ໃຈຕໍ່ຕັ້ງ** ກະຫ່າ**ແຕ່ຄວາມດີ** ຫາກຊີມີຄົນເຫັນ ຄ່າຄຸນຄວາມດີສ້າງ ທຸກເສັ້ນທາງເດີນກ້າວເອົາຄວາມດີຄຽງຄູ່ ບຸນຊິບໍ່າສົ່ງຍູ້ ຊົມທວັງໄດ້ດັ່ງມະໃນ **ທ່ານເອີຍ!**

❋ **ຊົມ**ເຊີຍ ວັນສ້າງຕັ້ງກອງທັບປະຊາຊົນລາວ ທີ່ຈະໝູນວຽນມາບັນຈົບ **ຄົບຮອບ 75 ປີ (20 ມັງກອນ 1949 14-20 ມັງກອນ 2024)** 75 ປີ ເອກອ້າງ ກອງທັບປະຊາຊົນລາວ ຊາວປະຊາດີໃຈ ຊື່ນຊົມຍ້ອງ ກອງກຳລັງບ່າໜ້າຮັກສາປິຕິພູມແຜ່ນ ທໍ່ລະບິເຂດແດ້ວນ ແດນລາວນີ້ຈຶ່ງຮຸ່ງເຮືອງ **ນັ້ນແລ້ວ!**



ອາດ ກະວີລາວ

## ມູນເຊື້ອກອງທັບ

**# ສາຍນ້ຳອູແດນງາມ**

❋ ປະຊາລາວຈາລຶກໝັ້ນ
ບໍ່ມີໄລລືມຫຼົງ
ຫຼາຍຜົນງານສານສ້າງ
ຄຸນຄ່າຄົງຄູ່ໄວ້

ຝັງແນບໃນຊວງ
ລົບເລືອນລົງໄດ້
ວິລະກຳສູງສິ່ງ
ຊາດໄດ້ຈື່ຈຳ ແທ້ນາ!

❋ 20 ມັງກອນແມ່ນມື້
ກອງທັບລາດຊະວົງ
ຂານອາສາຕໍ່ສູ້
ເພື່ອປະຊາຊາດພີ່ນ້ອງ

ສານກໍ່ວິລະຊົນ
ອາດຫານແຮງກ້າ
ຍິນຍອມສະຫຼະຊີບ
ໄກພົ້ນເຜດມານ ຊອບແລ້ວ!

❋ ເຖິງວ່າແສນຍາກຫຍຸ້ງ
ບໍ່ເຄີຍຍອມຈຳນົນ
ອຸປະສັກ ຢາຍຂວາງໜ້າ
ລະເບີດຝຸງກະສຸນກໍຜ່າມ້າງ

ລຳບາກກາຍໃຈ
ສັດຕູໂຕຮ້າຍ
ຕົ້ນທາງກໍຕາມຊ່າງ
ປະສົງໄວ້ບ່ອນມີໄຊ ພຸ້ນແລ້ວ!

❋ ແມ່ນເສັ້ນທາງຕ່ຳຄ້ອຍ
ບຸປ່າພູດົງໜາ
ອາໄສນອນຕາມພື້ນ
ແຕ່ໃຈບໍ່ໄຫວຫວັ່ນທໍ້

ລົງຮ່ອມແຄມເຫວ
ຜ່ານລຳທານນ້ຳ
ທັງຢືນຍາມແລງຄ່ຳ
ເກງຢ້ານຢ່າງໃດ

❋ ຫຼາຍສິບປີຕໍ່ສູ້
ສົມວ່າເປັນກອງທັບປະຊາຊົນລາວ
ເດີນຕາມການສອນຊີ້
ກອງທັບລາວເກັ່ງກ້າ ດັ່ງຄຳຍໍກ່າວຍ້ອງ

ມີທ່າໄຊຊະນະ
ເພື່ອປະຊາຊົນແທ້
ແນວທາງພັກເຍືອງສ່ອງ
ລາວນ້ອຍເຜັດຂີ້ໜູ ແທ້ນາ!

❋ 75 ປີວຽນພົບພໍ້
ໃຫ້ກອງທັບປະຊາຊົນລາວ
ເປັນຮົ້ວໜາລຽນລ້ອມ
ຄູ່ປະຊາຊາດເຊື້ອ ເພື່ອແດນລາວລ້ານຊ້າງ

ຂໍສິ່ງພອນໄຊ
ຮຸ່ງເຮືອງໃສແຈ້ງ
ປະຄອງເມືອງລາວຢູ່
ຈະເລີນກ້າວຊູ່ວັນ ນັ້ນແລ້ວ!




## ຊວນຍິ້ມ

**# ແອ່ນຕຸ້ງ**

### ເລື່ອງ: ຊອກຫາ

ມີພະນັກງານສົ່ງເຄື່ອງຄົນໜຶ່ງພະຍາຍາມໂທຫາລູກຄ້າເພື່ອສົ່ງເຄື່ອງ ເມື່ອມີຄົນຮັບສາຍພັດເປັນສຽງເດັກນ້ອຍເວົ້າຄ່ອຍໆ "ຮາໂລ ສະບາຍດີ"

**ພະນັກງານສົ່ງເຄື່ອງ:** ພໍ່ແມ່ຫຼານຢູ່ບໍ່ ຂໍລົມກັບເພີ່ນແດ່

**ເດັກນ້ອຍ:** ຢູ່ ແຕ່ເພີ່ນຄາວຽກ

**ພະນັກງານສົ່ງເຄື່ອງ:** ຊັ້ນຢູ່ເຮືອນຫຼານມີໃຜແດ່ ຂໍລົມກັບຂະເຈົ້າແດ່

**ເດັກນ້ອຍ:** ມີພະນັກງານດັບເພີງກັບຕຳຫຼວດ ແຕ່ຂະເຈົ້າກໍຄາວຽກຢູ່ຄືກັນ

**ພະນັກງານສົ່ງເຄື່ອງ:** ຂະເຈົ້າເຮັດຫຍັງຄືວຽກຫຼາຍແທ້

**ເດັກນ້ອຍ:** ຂະເຈົ້າຊອກຫຼານຢູ່

**ພະນັກງານສົ່ງເຄື່ອງ:** ?!?!?!?!?



## ຄະຕິເຕືອນໃຈ

**# ດອກຫຍ້າ**

ມີແຕ່ການກະທຳ ແລະ ຄຳເວົ້າ
ທີ່ບອກໃຫ້ຮູ້ວ່າ ເຈົ້າເປັນຄົນໜ້າເຄົາລົບ ຫຼືບໍ່
ແຕ່ບໍ່ແມ່ນຍີ່ຫໍ້ຂອງເສື້ອ ແລະ ລົດທີ່ເຈົ້າຂັບ

## ລັດຖະສະພາຕ່າງປະເທດ

# ໂອຕຣິດ ປັບປຸງກົດໝາຍ ຫ້າມສັນຍະລັກນາຊີ

*ການສະແດງສັນຍະລັກໃດກໍຕາມທີ່ເຊື່ອມໂຍງກັບພັກນາຊີເຢຍລະມັນ ເປັນການກະທຳຜິດຢ່າງຮ້າຍແຮງພາຍໃຕ້ກົດໝາຍຂອງໂອຕຣິດ ໂດຍມີໂທດປັບໃໝເງິນສູງສຸດ 20.000 ເອີໂຣ.*

ສຳນັກຂ່າວ AFP ລາຍງານຈາກນະຄອນຫຼວງວຽນ, ປະເທດໂອຕຣິດ ເມື່ອວັນທີ 16 ທັນວາ 2023 ວ່າ: ສະພາແຫ່ງຊາດ(ສະພາຕ່ຳ) ໂອຕຣິດ ໄດ້ຜ່ານມະຕິໃນກອງປະຊຸມເພີ່ມຄວາມເຂັ້ມງວດຂອງກົດໝາຍກ່ຽວກັບນາຊີ ເຮັດໃຫ້ການນຸ່ງຖື, ສະແດງ ຫຼື ປະດັບສັນຍະລັກທີ່ກ່ຽວຂ້ອງກັບພັກນາຊີເຢຍລະມັນໃນສະໄໝສົງຄາມ ແລະ ກຸ່ມເຄື່ອນໄຫວຝ່າຍຂວາຈັດ ຈະຕ້ອງຖືກລົງໂທດປັບໃໝເງິນສູງສຸດບໍ່ເກີນ 20.000 ເອີໂຣ.

ກົດໝາຍດັ່ງກ່າວ ຍັງອະນຸຍາດໃຫ້ເຈົ້າໜ້າທີ່ບັງຄັບໃຊ້ກົດໝາຍ ສາມາດຍຶດ"ເຄື່ອງທີ່ລະລຶກ" ກ່ຽວກັບນາຊີ ແລະ ຂະຫຍາຍຂອບເຂດອຳນາດຂອງຂະບວນການຍຸຕິທຳ ໃຫ້ປົກຄຸມໄປເຖິງຊາວໂອຕຣິດຢູ່ຕ່າງປະເທດ ໃນກໍລະນີຂອງການໂຜສເນື້ອໃນຊວນເຊື່ອກ່ຽວກັບນາຊີ ຫຼື ຈຳໜ່າຍສິນຄ້າກ່ຽວກັບນາຊີໃນອິນເຕີເນັດ.

ທັງນີ້, ຖ້າຜູ້ກະທຳຜິດພາຍໃຕ້ກົດໝາຍດັ່ງກ່າວເປັນເຈົ້າໜ້າທີ່ລັດ ຕ້ອງອອກຈາກຕຳແໜ່ງທັນທີ ແລະ ບໍ່ສາມາດເຮັດວຽກໃຫ້ອົງການລັດຖະບານໄດ້ອີກຕະຫຼອດຊີວິດ.

ນອກຈາກນີ້, ກອງປະຊຸມຍັງມີມະຕິຍົກລະດັບມາດຕະການລົງໂທດ "ການປະພຶດດູໝິ່ນ" ຂອງສັນຍະລັກແຫ່ງຊາດ ເຊັ່ນທຸງຊາດ ໂດຍການຈີກ ແລະ ທຳລາຍທຸງຊາດ ຖືວ່າເປັນການກະທຳຜິດທາງອາຍາ ຕ້ອງໄດ້ຮັບໂທດໜັກຕາມກົດໝາຍ.



# ອັງກິດ ຈະຫ້າມເດັກອາຍຸຕ່ຳກວ່າ 16 ປີ ໃຊ້ສື່ສັງຄົມ

ພົນລະເມືອງອັງກິດທີ່ມີອາຍຸຕ່ຳກວ່າ 16 ປີ ອາດຈະຖືກຫ້າມໃຊ້ສື່ສັງຄົມອອນລາຍ ເພື່ອປົກປ້ອງສຸຂະພາບຈິດຂອງກຸ່ມຄົນເຫຼົ່ານີ້ ພາຍໃຕ້ຮ່າງກົດໝາຍຄວາມປອດໄພທາງອິນເຕີເນັດ ທີ່ສະເໜີໂດຍນາຍົກລັດຖະມົນຕີ ຣິຊີ ຊູແນກ (Rishi Sunak) ອີງຕາມການລາຍງານຂອງສຳນັກຂ່າວ Bloomberg News ທີ່ອ້າງເຖິງແຫຼ່ງຂ່າວພາຍໃນເມື່ອວັນພະຫັດທີ 14 ທັນວາ 2023.

ການຫ້າມກຸ່ມໄວຮຸ່ນຢ່າງກວ້າງຂວາງ ຈາກການເຂົ້າເຖິງສື່ສັງຄົມຕ່າງໆ ເຊັ່ນ Tik Tok, Twitch ແລະ Snap ແມ່ນໜຶ່ງໃນຂໍ້ສະເໜີທີ່ເຂັ້ມງວດທີ່ສຸດ ທີ່ຂະນະນີ້ພວມຢູ່ພາຍໃຕ້ການພິຈາລະນາຂອງຄະນະລັດຖະບານ ເຊິ່ງກຳລັງຮວບຮວມຂໍ້ມູນຫຼັກຖານວ່າສື່ສັງຄົມເຫຼົ່ານີ້ອາດເປັນອັນຕະລາຍຕໍ່ເດັກນ້ອຍ ກ່ອນທີ່ຈະມີການປຶກສາຫາລືກັນໃນເດືອນມັງກອນນີ້.

ເມື່ອເດືອນຕຸລາ 2023 ປະເທດອັງກິດ ຜ່ານກົດໝາຍຄວາມປອດໄພທາງອິນເຕີເນັດ ເຊິ່ງບັງຄັບໃຫ້ສື່ສັງຄົມອອນລາຍ ປ້ອງກັນ ແລະ ລຶບບັນດາຂໍ້ຄວາມທີ່ຜິດກົດໝາຍໂດຍທັນທີ ໃນນີ້ລວມເຖິງການກໍການຮ້າຍ ແລະ ສື່ລາມົກອະນາຈານທີ່ຖືກເຜີຍແຜ່ເພື່ອການແກ້ແຄ້ນ ຖ້າບໍ່ດັ່ງນັ້ນ ຈະຖືກປັບໃໝເງິນສູງເຖິງ 10% ຂອງລາຍຮັບປະຈຳປີທົ່ວໂລກຂອງເຂົາເຈົ້າ.

ກົດໝາຍສະບັບນີ້ ຍັງບັງຄັບໃຫ້ສື່ສັງຄົມອອນລາຍໃຊ້ເຕັກໂນໂລຊີການກວດສອບອາຍຸ ເພື່ອປ້ອງກັນບໍ່ໃຫ້ເດັກນ້ອຍເຂົ້າເຖິງ ໃນຂະນະທີ່ເດັກນ້ອຍມີຄວາມສ່ຽງຕໍ່ຂໍ້ຄວາມທີ່ຜິດກົດໝາຍ ແລະ ເປັນອັນຕະລາຍ.



# ອີຣັກ ຈັດການເລືອກຕັ້ງຂັ້ນແຂວງ ຄັ້ງທຳອິດໃນຮອບ 10 ປີ



ສຳນັກຂ່າວ AFP ລາຍງານຈາກນະຄອນຫຼວງແບກແດດ, ປະເທດອີຣັກ ວ່າ: ອີຣັກໄດ້ຈັດການເລືອກຕັ້ງສະມາຊິກສະພາແຂວງຊຸດໃໝ່ 285 ບ່ອນນັ່ງ ເມື່ອວັນຈັນທີ 18 ທັນວາ 2023 ໂດຍມີຜູ້ສະໝັກປະມານ 6.000 ຄົນ, ໃນຂະນະທີ່ປະຊາຊົນຜູ້ມີສິດເລືອກຕັ້ງປະມານ 17 ລ້ານຄົນ ສາມາດອອກມາໃຊ້ສິດຢູ່ບັນດາໜ່ວຍເລືອກຕັ້ງ 7.166 ແຫ່ງ ໃນທົ່ວປະເທດ ລະຫວ່າງເວລາ 07:00-18:00 ໂມງ ຕາມເວລາທ້ອງຖິ່ນ (11:00-22:00 ໂມງຕາມເວລາໃນປະເທດລາວ).

ສຳລັບການເລືອກຕັ້ງທ້ອງຖິ່ນຄັ້ງນີ້ ຖືເປັນການເລືອກຕັ້ງສະມາຊິກສະພາຂັ້ນແຂວງຄັ້ງທຳອິດໃນຮອບ 10 ປີຂອງອີຣັກ; ສະພາຂັ້ນແຂວງ ໄດ້ຮັບການສ້າງຕັ້ງຂຶ້ນຫຼັງຈາກກອງທັບສະຫະລັດອາເມລິກາເຂົ້າໄປປະຕິບັດການຢູ່ອີຣັກ ເພື່ອໂຄ່ນລົ້ມອຳນາດລັດຖະບານຂອງປະທານາທິບໍດີ ຊັດດຳ ຮຸດເຊນ (Saddam Hussein) ເມື່ອປີ 2003 ມີພາລະບົດບາດຕົ້ນຕໍຄື ລົງຄະແນນສຽງເລືອກຕັ້ງເຈົ້າແຂວງ ແລະ ການຈັດສັນງົບປະມານທີ່ຈຳເປັນ ບໍ່ວ່າຈະເປັນການສຶກສາ, ສາທາລະນະສຸກ ແລະ ຄົມມະນາຄົມ.

ການເລືອກຕັ້ງໄດ້ຈັດຂຶ້ນຢູ່ 15 ແຂວງຂອງອີຣັກ, ຍົກເວັ້ນ 03 ແຂວງພາກເໜືອ ເຊິ່ງເປັນສ່ວນໜຶ່ງຂອງເຂດປົກຄອງຕົນເອງເຄີດິສະຖານ (Kurdistan) ແລະ ນຳໃຊ້ລະບົບການບໍລິຫານທີ່ແຕກຕ່າງກັນ; ນອກຈາກນີ້, ຄະນະກຳມະການການເລືອກຕັ້ງ ໄດ້ກຳນົດໂຄຕາຂອງຜູ້ສະໝັກເພື່ອໃຫ້ຢ່າງໜ້ອຍ 25 ສ່ວນຮ້ອຍ ຫຼື 1.600 ຄົນ ຕ້ອງເປັນແມ່ຍິງເຊິ່ງເປັນຂໍກົດໝາຍແຫ່ງການພັດທະນາທາງສັງຄົມຂອງອີຣັກອີກດ້ວຍ.

ໃນຂະນະທີ່ນັກວິເຄາະທາງດ້ານການເມືອງພິຈາລະນາວ່າ ພັນທະມິດທາງການເມືອງທີ່ສະໜັບສະໜູນອີຣ່ານ ຈະໄດ້ຮັບເລືອກຕັ້ງເຂົ້າສະພາຫຼາຍທີ່ສຸດ.

ສະພາຊຸດເກົ່າຖືກຍຸບເມື່ອປີ 2019 ເປັນສ່ວນໜຶ່ງຂອງການປະນີປະນອມຈາກລັດຖະບານ ທີ່ມີຕໍ່ການປະທ້ວງຕໍ່ຕ້ານລັດຖະບານເມື່ອປີ 2019.

# ສະພາແຫ່ງຊາດຝຣັ່ງ ປະຕິເສດກົດໝາຍ ປະຕິຮູບການຄວບຄຸມຜູ້ອົບພະຍົບ

ສຳນັກຂ່າວ AFP ລາຍງານຈາກນະຄອນຫຼວງປາຣີ, ປະເທດຝຣັ່ງ ວ່າ: ສະພາຜູ້ແທນລາຊະດອນ (ສະພາແຫ່ງຊາດ) ໄດ້ລົງຄະແນນສຽງສ່ວນຫຼາຍ 270 ຕໍ່ 265 ສຽງ ໃນກອງປະຊຸມເມື່ອວັນຈັນທີ 11 ທັນວາ 2023 ບໍ່ເຫັນດີປັບປຸງຮ່າງກົດໝາຍວ່າດ້ວຍຜູ້ອົບພະຍົບສະບັບປັດຈຸບັນ ເຊິ່ງສະເໜີໂດຍປະທານາທິບໍດີ ເອັມມານູເອວ ມາຄົງ (Emmanuel Macron).

ເຖິງແມ່ນວ່າລັດຖະບານໃຫ້ເຫດຜົນວ່າ ການປັບປຸງກົດໝາຍຈະເປັນການສະໜັບສະໜູນການປະຕິບັດວຽກງານຂອງອົງການທີ່ກ່ຽວຂ້ອງ ເພື່ອສາມາດຈຳແນກກຸ່ມຜູ້ອົບພະຍົບໄດ້ງ່າຍຂຶ້ນ ແລະ ຄວບຄຸມການໄຫຼເຂົ້າຂອງຜູ້ອົບພະຍົບຢ່າງມີປະສິດທິພາບສູງຂຶ້ນ ທັງເປັນການປະຢັດງົບປະມານຂອງລັດຖະບານເພາະຈະມີການຕັດເງິນຊ່ວຍເຫຼືອດ້ານສະຫວັດດີການແກ່ຜູ້ອົບພະຍົບຜິດກົດໝາຍ.

ແນວໃດກໍດີ, ບັນດາສະມາຊິກສະພາແຫ່ງຊາດຈາກພັກຂວາຈັດ, ພັກຊ້າຍຈັດ ແລະ ພັກຝ່າຍຊ້າຍ ຮວມກຳລັງກັນສະເພາະກິດເພື່ອໂຄ່ນລົ້ມຮ່າງກົດໝາຍ; ໂດຍຝ່າຍຊ້າຍກ່າວວ່າ ເຮັດໃຫ້ຂະແໜງການລັດຖະບານ ເປັນຜູ້ເພີ່ມຄວາມອຶດທົນກັບຜູ້ອົບພະຍົບ, ສ່ວນຝ່າຍຂວາຈັດເຫັນວ່າ ການປັບປຸງກົດໝາຍຍັງບໍ່ເຂັ້ມງວດພຽງພໍ.

ພັກກຳອຳນາດສາຍກາງຂອງທ່ານ ມາຄົງ ໄດ້ສູນເສຍສຽງສ່ວນຫຼາຍໃນສະພາແຫ່ງຊາດ ຫຼັງຈາກການເລືອກຕັ້ງປີ 2022 ເຊິ່ງແນ່ນອນວ່າກາຍເປັນອຸປະສັກສຳລັບລັດຖະບານໃນການສະເໜີ ແລະ ຜ່ານກົດໝາຍຫຼາຍສະບັບ.

ເມື່ອເດືອນມີນາ2023 ທ່ານ ນາງ ເອລີຊາເບດ ບອນ (Élisabeth Borne) ນາຍົກລັດຖະມົນຕີຝຣັ່ງ ໃຊ້ອຳນາດຕາມມາດຕາ 49.3 ຂອງລັດຖະທຳມະນູນ ທີ່ໃຫ້ສິດລັດຖະບານກາງໃນການຜ່ານກົດໝາຍໄດ້ອັດຕະໂນມັດໂດຍບໍ່ຈຳເປັນຕ້ອງຜ່ານການລົງມະຕິຈາກສະພາແຫ່ງຊາດ ຜ່ານຮ່າງກົດໝາຍເພີ່ມອາຍຸບຳນານຂອງແຮງງານໃນລະບົບ ເປັນ 64 ປີ ເຊິ່ງໄດ້ຮັບການປະນາມຢ່າງແຮງຈາກຝ່າຍຄ້ານ ແລະ ກໍ່ໃຫ້ເກີດການປະທ້ວງໃນເວລານັ້ນແກ່ຍາວຫຼາຍເດືອນ.

## ເຝົ້າເບິ່ງ ໂລກ ຜ່ານ ...

❖ ວິເສດ ສະແຫວງສຶກສາ

# ຊີວິດປອດໄພ ເພື່ອສິ່ງແວດລ້ອມສົດໃສ

ພາຍໃຕ້ຫົວຂໍ້ບົດນີ້ ຂໍສະເໜີບົດຮຽນກ່ຽວກັບການແກ້ໄຂບັນຫາຂີ້ເຫຍື້ອປະເພດຢາງ (ປະລາສະຕິກ) ໃນ ສ.ເກົາຫຼີ ແລະ ເລື່ອງການຟື້ນຊີບຂອງຍຸກການນຳໃຊ້ລົດຖີບຢູ່ ສປ ຈີນ. ທັງສອງເລື່ອງນີ້ລ້ວນແຕ່ມີບົດບາດສຳຄັນໃນການແກ້ໄຂບັນຫາສິ່ງແວດລ້ອມເສື່ອມໂຊມຢູ່ໃນໂລກປັດຈຸບັນ. ການແກ້ໄຂບັນຫາຂີ້ເຫຍື້ອປະເພດຢາງນັ້ນ ໄດ້ກາຍເປັນກະແສທີ່ມາແຮງໃນທຸກໆປະເທດ ເພາະວ່າຂີ້ເຫຍື້ອປະເພດນີ້ເປັນອັນຕະລາຍຮ້າຍແຮງຕໍ່ສິ່ງແວດລ້ອມ, ຖ້າມັນລະບາດຢູ່ໜ້າດິນກໍຈະເຮັດໃຫ້ດິນເສື່ອມຄຸນນະພາບ, ຖ້າຈູດເຜົາກໍຈະກາຍເປັນອາຍພິດ, ຖ້າລະບາດຢູ່ຕາມແມ່ນ້ຳລຳເຊ ຫຼື ຕາມທ້ອງທະເລ ກໍຈະເຮັດໃຫ້ຄຸນນະພາບຂອງນ້ຳເສື່ອມຄຸນ ແລະ ຈະທຳລາຍພັນພືດ ແລະ ພັນສັດໃນນ້ຳ. ສ ເກົາຫຼີ ເປັນປະເທດທີ່ເອົາຈິງເອົາຈັງ ໃນການແກ້ໄຂບັນຫາຂີ້ເຫຍື້ອປະເພດຢາງ ໂດຍມີການຮ່ວມມືຈາກບໍລິສັດຈຳໜ່າຍເຄື່ອງດື່ມລະດັບຂ້າມຊາດເຊັ່ນ ສະຕາບັກ (Starbuck). ໃນວັນທີ 30 ສິງຫາ 2018, ບໍລິສັດ ສະຕາບັກ ສາຂາ ສ. ເກົາຫຼີ ໄດ້ອອກມາປະກາດແຜນລຶບລ້າງການນຳໃຊ້ທໍ່ດູດເຄື່ອງດື່ມທີ່ເຮັດດ້ວຍຢາງທັງໝົດໃນບັນດາຮ້ານຂອງບໍລິສັດຢູ່ ສ. ເກົາຫຼີ . ພໍປະກາດແລ້ວ ກໍໄດ້ເລີ່ມເຂົ້າສູ່ການທົດລອງປະຕິບັດຕົວຈິງທີ່ມີກຳນົດ 2 ເດືອນ-ແຕ່ວັນທີ 10 ກັນຍາ ຫາ ວັນທີ 10 ພະຈິກ 2018. ບັນດາ ຮ້ານ ສະຕາບັກ ໃນ ສ.ເກົາຫຼີ ຈຳນວນ 100 ແຫ່ງ ໃນນະຄອນຫຼວງເຊອູນ ກໍຄືໃນບັນດາຕົວເມືອງໃຫຍ່ໆ ໄດ້ເຂົ້າຮ່ວມໃນບັ້ນທົດລອງນີ້ (ສະຕາບັກ ມີຮ້ານເຄື່ອງດື່ມ ແລະ ອາຫານກິນດ່ວນໃນທົ່ວໂລກຈຳນວນ 28.000 ແຫ່ງ-ສະຖິຕິປີ 2018) ຜົນປະກົດວ່າ ບັ້ນທົດລອງໄດ້ປະສົບຜົນສຳເລັດຕາມຄາດ ຄືສາມາດນຳໃຊ້ບົດຮຽນທີ່ເກັບກ່ຽວໄດ້ເພື່ອກຳຈັດທໍ່ດູດເຄື່ອງດື່ມທີ່ເຮັດດ້ວຍຢາງໃຫ້ສິ້ນໄປຈາກຮ້ານສະຕາບັກທຸກແຫ່ງ ໃນ ສ.ເກົາຫຼີ ໃນປີ 2020. ເປັນອັນວ່າມາດຕະການກຳຈັດຂີ້ເຫຍື້ອທໍ່ດູດປະເພດຢາງຂອງສະຕາບັກໃນ ສ. ເກົາຫຼີ ນັ້ນໄດ້ນຳໄປໃຊ້ເພື່ອກຳຈັດທໍ່ດູດເຮັດດ້ວຍຢາງ. ໃນບັນດາຮ້ານຂອງສະຕາບັກທຸກໆແຫ່ງໄດ້ເຖິງ 1 ຕື້ທໍ່ຕໍ່ປີ. ຈາກຜົນສຳເລັດໃນການກຳຈັດຂີ້ເຫຍື້ອທໍ່ຢາງ. ທາງບໍລິສັດ ສະຕາບັກໄດ້ເລີ່ມແຜນກຳຈັດເຄື່ອງໃຊ້ຊະນິດອື່ນໆທີ່ເຮັດດ້ວຍຢາງ ໃນບັນດາຮ້ານຂອງຕົນເຊັ່ນບ່ວງ, ຈອກ, ຈານ ໃນຂັ້ນຕໍ່ມາ.

ທີ່ ສປ ຈີນ, ໃນກວ່າ 2 ທົດສະວັດຜ່ານມານີ້, ປະຊາກອນລົດໃຫຍ່ໄດ້ກາຍເປັນເຈົ້າບັນດາເສັ້ນທາງໃນນະຄອນຫຼວງ ປັກກິ່ງ, ບັນດາຕົວເມືອງໃຫຍ່ໆ ກໍຄືໃນເຂດຊົນນະບົດເຊິ່ງເມື່ອກ່ອນເຄີຍເປັນທະເລລົດຖີບ. ແຕ່ລົດໃຫຍ່ຕ່າງລົດຖີບຢູ່ບ່ອນວ່າມັນໄດ້ນຳເອົາຄວັນພິດ ມາພ້ອມກັບຄວາມສະດວກສະບາຍ, ເອີ້ນວ່າຄວາມສະບາຍເອືອບດ້ວຍຢາພິດ. ຍ້ອນແນວນີ້ເອງ, ໜຶ່ງໃນວິທີການແກ້ໄຂມົນລະພິດທາງອາກາດຂອງທາງການຈີນ ກໍຄືຕ້ອງຫວນຄືນໄປນຳໃຊ້ລົດຖີບໃຫ້ໄດ້ໃນຊັດສ່ວນທີ່ສົມຄວນ. ແຜນຟື້ນຄືນການນຳໃຊ້ລົດຖີບຂອງຈີນນັ້ນ ໄດ້ເລີ່ມຂຶ້ນຢ່າງຈິງຈັງໃນປີ 2016 ໂດຍກຳນົດໃຫ້ສ້າງທາງສະເພາະລົດຖີບ, ບ່ອນຈອດ ແລະ ບ່ອນເຊົ່າລົດຖີບ. ການທົດລອງນຳໃຊ້ລົດຖີບໄດ້ເລີ່ມແຕ່ປີ 2016-2018 ໂດຍໄດ້ມີຜົນສະຫຼຸບອອກມາວ່າ ພຽງໄລຍະ 2 ປີເທົ່ານັ້ນ ກໍໄດ້ເກີດມີບໍລິສັດໃຫ້ເຊົ່າລົດຖີບ 77 ແຫ່ງ, ມີຜູ້ໃຊ້ບໍລິການເຊົ່າລົດຖີບ 400 ລ້ານຄົນ, ໃນແຕ່ລະວັນມີຜູ້ໃຊ້ລົດຖີບ 70 ລ້ານຄົນ; ລາຍຮັບຂອງບໍລິສັດເຊົ່າລົດຖີບພຸ່ງຂຶ້ນສູງເຖິງ 221,3 ຕື້ຢວນ ແລະ ໄດ້ສ້າງວຽກເຮັດງານທຳໄດ້ເຖິງ 390.000 ຕຳແໜ່ງງານ. ເປັນອັນວ່າໂຄງການຟື້ນຊີບລົດຖີບໃນ ສປ ຈີນ ນັ້ນ ໄດ້ທັງຊ່ວຍປະຢັດນ້ຳມັນ ທັງສ້າງລາຍຮັບ ແລະ ສ້າງວຽກເຮັດງານທຳໄປພ້ອມໆກັນ.




## ເຫດຜົນ

*# ບ່າວກະບື*

"ເອີ່... ນາງເສີດເອີຍ ຂ້ອຍບໍ່ເຫັນໜ້າເຫັນຕາເຈົ້າເຫິງແລ້ວໃດບໍ່ "ທ່ານໝໍເວົ້າກັບຄົນເຈັບຂາປະຈຳຂອງເຂົາຄົນໜຶ່ງ.

ນາງເສີດ ຕອບຄືນວ່າ: "ຮູ້ຢູ່... ກໍຍ້ອນວ່າຂ້ານ້ອຍບໍ່ສະບາຍໜັກຫັ້ນລະທ່ານໝໍເອີຍ ຈຶ່ງບໍ່ໄດ້ມາໃຫ້ເຫັນໜ້າ".

## THE REASON

*# BAOKBU*

"Well, Mrs Sert, I haven't seen you for quite a long time", said the doctor to one of his regular patients.

Mrs. Sert replied: "I know, because I've been very ill... doctor".




● ໂດຍ : ພູຜາ

ບໍລິສັດ ຫຼວງພະບາງ ພາວເວີ ຈຳກັດ
LUANG PRABANG POWER COMPANY LIMITED

ອຸດສາຫະກຳ ຈົ່ງຈູ້
中鉅實業

ກຸ່ມບໍລິສັດ ອີພີແອວ ຈຳກັດຜູ້ດຽວ
EPL GROUP SOLE CO.,LTD

ທະນາຄານພັດທະນາລາວ
LDB Bank

ຮ້ານຄຳພູວົງ
PV
PHOUVONG JEWELRY

SCNG
SOMCHAYNEUK GROUP

**ຜູ້ຊີ້ນຳ :**
ທ່ານ ສິງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ :**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ
ທ່ານ ຄຳຫວັນ ດາລາວົງ

**ຄະນະບັນນາທິການ :**
ທ່ານ ປອ. ພົດສະໄໝ ບຸນວິໄລ ຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ

**ກອງບັນນາທິການ :**
ນາງ ກົງໃຈ ແສງອຳພັນ
ນາງ ໄຊໂສພາພອນ ມິ່ງມຸງຄຸນ
ທ່ານ ກົງທະນູຄຳ ພິພັດເສລີ
ນາງ ສຸພາວັນ ທອມສະນິດ

**ອອກແບບ - ຈັດໜ້າ :**
ນາງ ກຸກກິກ ບຸດດາໄຊ